

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຄາດໝາຍ ຂອງ ສປປ ລາວ ໃນການປະກອບສ່ວນ ແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ

Intended Nationally Determined Contributions (INDC)

16 ຕຸລາ 2015

ສາລະບານ

1. ສະພາບເງື່ອນໄຂ ຂອງ ສປປ ລາວ 3

2. ມາດຕະການຫຼຸດຜ່ອນອາຍພິດເຮືອນແກ້ວ 4

2.1 ການປະກອບສ່ວນ 4

2.2 ຄາດໝາຍສູ້ຊົນ ແລະ ຄວາມອາດສາມາດ ໃນການປະກອບສ່ວນ 6

3. ມາດຕະການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ 7

4. ຂະບວນການສ້າງ ແລະ ແຜນການຈັດຕັ້ງປະຕິບັດ.....10

ເອກະສານຊ້ອນທ້າຍທີ 1: ຕາຕະລາງສັງລວມມາດຕະການຫຼຸດຜ່ອນອາຍພິດເຮືອນແກ້ວ.....14

ເອກະສານຊ້ອນທ້າຍທີ 2: ຕາຕະລາງສັງລວມມາດຕະການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.....24

1. ສະພາບເງື່ອນໄຂ ຂອງ ສປປ ລາວ

ສປປ ລາວ ໄດ້ວາງເປົ້າໝາຍໄລຍະຍາວ ສຳລັບການພັດທະນາປະເທດ ຊຶ່ງໄດ້ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ລວມທັງການວາງວິໄສທັດຮອດ ປີ 2030. ໃນວິໄສທັດນີ້ ແມ່ນໄດ້ກຳນົດເປົ້າໝາຍການພັດທະນາປະເທດ ໃຫ້ຫຼຸດພົ້ນອອກຈາກສະຖານະປະເທດດ້ອຍພັດທະນາ (LDC) ແລະ ກ້າວໄປສູ່ປະເທດກຳລັງພັດທະນາ ທີ່ມີລາຍຮັບປານກາງຕ່ຳ ໃນປີ 2030. ເຖິງຢ່າງໃດກໍຕາມ ສປປ ລາວ ໄດ້ຮັບຮູ້ເຖິງຄວາມສຳພັນອັນແໜ້ນແຟ້ນ ລະຫວ່າງ ການພັດທະນາເສດຖະກິດ ແລະ ຄວາມຍືນຍົງຂອງສິ່ງແວດລ້ອມ. ຍ້ອນເຫດຜົນ ດັ່ງກ່າວ, ຈຶ່ງໄດ້ບັນຈຸບັນຫາສິ່ງແວດລ້ອມ ເຂົ້າໃນການວາງແຜນ ແລະ ການສ້າງນະໂຍບາຍ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ແລະ ກຳລັງສ້າງຮ່າງກົດໝາຍ ວ່າດ້ວຍການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ ຊຶ່ງຈະເປັນກອບທິດທາງສຳຄັນ ເພື່ອການຄຸ້ມຄອງ ແລະ ເຄື່ອນໄຫວວຽກງານ ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ ໃຫ້ມີປະສິດທິຜົນສູງຂຶ້ນ ແລະ ມີຄວາມເປັນເອກະພາບກັນໃນຂອບເຂດ ທົ່ວປະເທດ ທັງໄລຍະສັ້ນ ແລະ ໄລຍະຍາວ. ກົດໝາຍດັ່ງກ່າວ ຄາດວ່າຈະໄດ້ຮັບຮອງໃນປີ 2017.

ຍຸດທະສາດການປ່ຽນແປງດິນຟ້າອາກາດ ຂອງ ສປປ ລາວ ໄດ້ຖືກຮັບຮອງໃນຕົ້ນປີ 2010 ຊຶ່ງໄດ້ ກຳນົດ ວິໄສທັດ: “ໃນອານາຄົດ ສປປ ລາວ ມີຄວາມສາມາດ ໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ເພື່ອຮັບປະກັນການພັດທະນາເສດຖະກິດແບບຍືນຍົງ, ຫຼຸດຜ່ອນຄວາມ ທຸກຍາກ, ຮັບປະກັນສຸຂະພາບ ແລະ ຄວາມປອດໄພຂອງປະຊາຊົນ, ປັບປຸງຄຸນນະພາບສິ່ງແວດລ້ອມທຳມະຊາດ ແລະ ສິ່ງເສີມຄຸນນະພາບຊີວິດຂອງພົນລະເມືອງລາວທຸກຄົນ”.

ນອກຈາກນີ້, ເພື່ອຜັນຂະຫຍາຍຍຸດທະສາດດັ່ງກ່າວ ກໍໄດ້ພັດທະນາແຜນດຳເນີນງານແຫ່ງຊາດ ການປ່ຽນ ແປງດິນຟ້າອາກາດ ຊຸມປີ 2013-2020, ຊຶ່ງລວມເອົາ ມາດຕະການຫຼຸດຜ່ອນອາຍພິດເຮືອນແກ້ວ ແລະ ມາດຕະການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ສຳລັບ ຂົງເຂດ ກະສິກຳ, ການນຳໃຊ້ທີ່ດິນ ແລະ ປ່າໄມ້, ຊັບພະຍາກອນນ້ຳ, ພະລັງງານ, ອຸດສາຫະກຳ, ການຂົນສົ່ງ ແລະ ການພັດທະນາຕົວເມືອງ ແລະ ສາທາລະນະສຸກ.

ສປປ ລາວ ເປັນປະເທດໜຶ່ງທີ່ມີຄວາມບອບບາງສູງ ຕໍ່ບັນຫາການປ່ຽນແປງດິນຟ້າອາກາດ ໃນນັ້ນການປ່ອຍອາຍພິດເຮືອນແກ້ວ ມີພຽງແຕ່ 51.000 ຈິກາກາຕາມ ຫຼື 0,001% ຂອງການປ່ອຍອາຍພິດເຮືອນແກ້ວ ທັງໝົດໃນທົ່ວໂລກ, ເຖິງຢ່າງໃດກໍຕາມ ສປປ ລາວ ໄດ້ມີແຜນການສູ້ຊົນໃນການຫຼຸດຜ່ອນອາຍພິດເຮືອນແກ້ວ ໄປຄຽງຄູ່ກັບການເພີ່ມຄວາມເອົາໃຈໃສ່ໃນການເສີມສ້າງຄວາມທົນທານ ຕໍ່ຜົນກະທົບດ້ານລົບ ຂອງການປ່ຽນແປງດິນຟ້າອາກາດ. ໃນນີ້ ລວມມີ:

- ຄາດໝາຍສູ້ຊົນທີ່ໄດ້ກຳນົດໃນແຜນຍຸດທະສາດປ່າໄມ້ແຫ່ງຊາດ ໂດຍສະເພາະ ແມ່ນການວາງຄາດ ໝາຍສູ້ຊົນ ເພື່ອເພີ່ມເນື້ອທີ່ປົກຫຸ້ມຂອງປ່າໄມ້ ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດ ໃນປີ 2020 ແລະ ຮັກສາລະດັບການເພີ່ມຂຶ້ນເນື້ອທີ່ປົກຫຸ້ມຂອງປ່າໄມ້ ໃຫ້ດຳເນີນຢ່າງຕໍ່ເນື່ອງ ຊຶ່ງໃນນີ້ ຍັງຊ່ວຍຫຼຸດຜ່ອນຄວາມສ່ຽງໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ຕະຫຼອດເຖິງການປ້ອງກັນການເຊື່ອມໂຊມຂອງດິນ. ພ້ອມດຽວກັນນີ້ ການວາງຄາດໝາຍສູ້ຊົນດັ່ງກ່າວ ຍັງເປັນການຊ່ວຍຫຼຸດຜ່ອນອາຍພິດເຮືອນແກ້ວ ທີ່ສຳຄັນ ແລະ ຍາວນານ;
- ການຜະລິດພະລັງງານໄຟຟ້າຂະໜາດໃຫຍ່ ໃນ ສປປ ລາວ ແມ່ນໄດ້ມາ ຈາກແຫຼ່ງພະລັງງານທົດແທນເກືອບ 100%. ພ້ອມດຽວກັນນີ້ ສປປ ລາວ ຍັງມີແຜນການນຳໃຊ້ທ່າແຮງຂອງແຫຼ່ງພະລັງງານໄຟ ຟ້ານ້ຳຕົກ ຊຶ່ງເປັນແຫຼ່ງພະລັງງານ

ທີ່ສະອາດເພື່ອສົ່ງອອກ; ສິ່ງນີ້ບໍ່ພຽງແຕ່ ເປັນຜົນປະໂຫຍດຕໍ່ ສປປ ລາວ ເທົ່ານັ້ນ ແຕ່ຍັງເປັນຜົນປະໂຫຍດຕໍ່ບັນດາປະເທດອ້ອມຂ້າງເປັນຕົ້ນ ແມ່ນປະເທດກຳປູເຈຍ, ສສ ຫວຽດນາມ, ໄທ ແລະ ສິງກະໂປ ຊຶ່ງເປັນການເພີ່ມພະລັງງານທີ່ສະອາດໃນອາຊີຕາເວັນອອກສຽງໃຕ້;

- ສຳລັບ ການຜະລິດພະລັງງານໄຟຟ້າຂະໜາດນ້ອຍ, ສປປ ລາວ ຍັງໄດ້ມີແຜນການຈັດຕັ້ງປະຕິບັດຍຸດທະສາດພະລັງງານທົດແທນ ເພື່ອແນ່ໃສ່ ເພີ່ມອັດຕາສ່ວນຂອງພະລັງງານທົດແທນຂະໜາດນ້ອຍ ໃຫ້ໄດ້ 30% ຂອງການຊົມໃຊ້ພະລັງງານທັງໝົດ ໃນປີ 2030;
- ແຜນນະໂຍບາຍຄຸ້ມຄອງທີ່ດິນແຫ່ງຊາດ ຄາດວ່າຈະໄດ້ຖືກຮັບຮອງໃນປີ 2015 ຊຶ່ງຈະເປັນພື້ນຖານສຳຄັນ ໃນການປັບປຸງກົດໝາຍທີ່ດິນ, ກົດໝາຍປ່າໄມ້ ແລະ ກົດໝາຍຊັບພະຍາກອນນ້ຳ ໂດຍ ຈະເປັນການປະກອບສ່ວນຫຼຸດຜ່ອນຜົນກະທົບ ຈາກການປ່ຽນແປງດິນຟ້າອາກາດ;
- ສິ່ງເສີມເຕັກໂນໂລຊີ ທີ່ເປັນມິດຕໍ່ສິ່ງແວດລ້ອມ ໃນຂະແໜງການອຸດສາຫະກຳ ແລະ ການພັດທະນາພື້ນຖານໂຄງລ່າງ ຊຶ່ງເປັນການປະກອບສ່ວນເຂົ້າໃນການພັດທະນາຮອບດ້ານ ແລະ ເສດຖະ ກິດ ສີຂຽວ ເພື່ອຮັບປະກັນການພັດທະນາແບບຍືນຍົງ; ສິ່ງນີ້ແມ່ນສ້າງຄວາມທົນທານ ຕໍ່ການປ່ຽນແປງ ດິນຟ້າອາກາດ ແລະ ຫຼຸດຜ່ອນຜົນກະທົບຈາກໄພພິບັດທຳມະຊາດ.

ການປ່ຽນແປງດິນຟ້າອາກາດ ໄດ້ສົ່ງຜົນກະທົບ ຕໍ່ການດຳລົງຊີວິດ, ການຄ້ຳປະກັນດ້ານສະບຽງອາຫານ, ການສະໜອງນ້ຳ ແລະ ສຸຂະພາບ ຂອງຜົນລະເມືອງສ່ວນໃຫຍ່ໃນຂອບເຂດທົ່ວປະເທດ. ຜົນກະທົບຈາກການປ່ຽນແປງດິນຟ້າອາກາດທີ່ເກີດຂຶ້ນສ່ວນໃຫຍ່ ແມ່ນໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ຊຶ່ງຄາດຄະເນວ່າບັນຫາເຫຼົ່ານີ້ຈະມີຄວາມຖີ່ ແລະ ຮຸ່ນແຮງ ເພີ່ມຂຶ້ນໃນອະນາຄົດ. ຕໍ່ບັນຫາດັ່ງກ່າວນີ້ ສປປ ລາວ ມີຄວາມຈຳເປັນອັນຮີບດ່ວນ ເພື່ອສ້າງຄວາມທົນທານ ແລະ ຄວາມສາມາດໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຢູ່ທຸກຂະແໜງ ການ. ສຳລັບລາຍລະອຽດ ກ່ຽວກັບຄວາມບອບບາງ ແລະ ວິທີການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໄດ້ອະທິບາຍ ໃນພາກທີ 3 ຂອງຄາດໝາຍແຫ່ງຊາດ ສະບັບນີ້.

ສປປ ລາວ ໄດ້ມີຄວາມພະຍາຍາມສູງ ໃນການຈັດຕັ້ງປະຕິບັດ ຍຸດທະສາດ ແລະ ແຜນດຳເນີນງານການປ່ຽນແປງດິນຟ້າອາກາດ ແຫ່ງຊາດ ເພື່ອຜົນປະໂຫຍດຂອງປະເທດ, ພາກພື້ນ ແລະ ສາກົນ. ເຖິງຢ່າງໃດກໍຕາມ, ສປປ ລາວ ຍັງມີຄວາມຈຳເປັນ ຈະຕ້ອງໄດ້ຮັບການຊ່ວຍເຫຼືອ ດ້ານວິຊາການ ແລະ ການເງິນ ອັນຮີບດ່ວນ ເພື່ອດຳເນີນວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນອາຍພິດເຮືອນແກ້ວ ທີ່ໄດ້ກຳນົດໃນຄາດໝາຍແຫ່ງຊາດສະບັບນີ້.

2. ມາດຕະການຫຼຸດຜ່ອນອາຍພິດເຮືອນແກ້ວ

2.1 ການປະກອບສ່ວນ

ສປປ ລາວ ໄດ້ກຳນົດບັນດາໜ້າວຽກເພື່ອຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນອາຍພິດເຮືອນແກ້ວ ແລະ ການຄາດຄະເນຈຳນວນການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວເບື້ອງຕົ້ນ ໃນອະນາຄົດ; ເພື່ອບັນລຸຄາດໝາຍທັງໝົດທີ່ວາງໄວ້ນັ້ນ ແມ່ນຍັງມີຄວາມຈຳເປັນຕ້ອງໄດ້ຮັບການໜັບສະໜູນເພີ່ມເຕີມຈາກສາ ກົນ. ລາຍລະອຽດ ກ່ຽວກັບໜ້າວຽກ ລວມທັງວິທີການຫຼຸດຜ່ອນອາຍພິດເຮືອນແກ້ວ, ແຜນການຈັດຕັ້ງປະຕິບັດ ແລະ ຄວາມຕ້ອງການສະໜັບສະໜູນຈາກສາກົນທີ່ຈຳເປັນ ແມ່ນໄດ້ສັງລວມໃນພາກທີ 4 ແລະ ເອກະສານຊ້ອນ ທ້າຍທີ 1 ຕາມລຳດັບ.

ຕາຕະລາງທີ 1: ແຜນງານ ແລະ ຄາດໝາຍສູ້ຊົນ ການຫຼຸດຜ່ອນອາຍພິດເຮືອນແກ້ວ ຂອງ ສປປ ລາວ ສຳລັບປີ 2015-2030

ລ/ດ	ໜ້າວຽກ	ຈຸດປະສົງ	ຄາດຄະເນຈຳນວນການຫຼຸດຜ່ອນອາຍພິດເຮືອນແກ້ວ
1	ຈັດຕັ້ງປະຕິບັດຍຸດທະສາດປ່າໄມ້ ປີ 2020 ຂອງ ສປປ ລາວ	ເພື່ອເພີ່ມເນື້ອທີ່ປົກຫຸ້ມຂອງປ່າໄມ້ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດ (ປະມານ 16.58 ລ້ານເຮັກຕາ). ເມື່ອເປົ້າໝາຍດັ່ງກ່າວໄດ້ບັນລຸ, ການຫຼຸດຜ່ອນອາຍພິດເຮືອນແກ້ວ ຍັງຈະສາມາດສືບຕໍ່ພາຍຫຼັງປີ 2020	69.183.340 tCO_{2e}
2	ຈັດຕັ້ງປະຕິບັດຍຸດທະສາດພັດທະນາພະລັງງານທົດແທນ ໃນ ສປປ ລາວ	• ເພື່ອເພີ່ມອັດຕາສ່ວນຂອງພະລັງງານທົດແທນ ໃຫ້ໄດ້ 30% ຂອງການຊົມໃຊ້ພະລັງງານທັງໝົດຮອດປີ 2025; • ເພື່ອເພີ່ມອັດຕາສ່ວນຂອງນ້ຳມັນຊີວະພາບໃຫ້ໄດ້ 10% ຂອງຄວາມຕ້ອງການນຳໃຊ້ນ້ຳມັນຢູ່ຂະແໜງການຂົນສົ່ງຮອດປີ 2025.	478.000.000 tCO_{2e} ແຕ່ 2015 ຫາ 2020; ແລະ 770.000.000 ແຕ່ 2020 ຫາ 2025
3	ຈັດຕັ້ງປະຕິບັດແຜນງານພັດທະນາໄຟຟ້າໃນເຂດຊົນນະບົດ	ສປປ ລາວ ໄດ້ວາງເປົ້າໝາຍການສະໜອງໄຟຟ້າໃຫ້ຄົວເຮືອນໃຫ້ໄດ້ 90% ຂອງຄົວເຮືອນໃນເຂດຊົນນະບົດ ທົ່ວປະເທດ ໃນປີ 2020.	63.180 tC02 /ປີ ຫຼື 630.180 tC02 ແຕ່ 2010 ຫາ 2020.
4	ຈັດຕັ້ງປະຕິບັດ ໜ້າວຽກທີ່ໄດ້ກຳນົດພາຍໃຕ້ ກົນໄກຫຼຸດ ຜ່ອນອາຍພິດເຮືອນແກ້ວ ຕາມສະພາບເງື່ອນໄຂຂອງປະເທດ (NAMAs) ຢູ່ຂະແໜງຂົນສົ່ງ	ເພື່ອພັດທະນາລະບົບເສັ້ນທາງ ແລະ ການສັນຈອນໃຫ້ດີຂຶ້ນກ່ວາເກົ່າ ຊຶ່ງຈະຊ່ວຍປະຫຍັດນ້ຳມັນ ແລະ ຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ຖ້າທຽບໃສ່ສະພາບໃນປະຈຸບັນ (BAU) ພ້ອມດຽວກັນນີ້ຈະຊ່ວຍຫຼຸດຜ່ອນມົນລະພາວະ ລວມທັງເປັນຜົນປະໂຫຍດຕໍ່ດ້ານອື່ນໆ ເຊັ່ນ: ປັບປຸງຄຸນນະພາບອາກາດ ແລະ ສຸກຂະພາບ.	• 32.746tCO_2/ຄົນ/ປີ(ພັດທະນາຕາໜ່າງເສັ້ນທາງ); • 158.343tCO_2/ຄົນ/ປີ,(ການພັດທະນາຂົນສົ່ງມວນຊົນ) ໃນປີ 2025 ທຽບໃສ່ສະພາບໃນປະຈຸບັນ (BAU). ການຫຼຸດຜ່ອນ ແຕ່ 2010 ຫາ 2020

			ແມ່ນ ປະມານ 300.000 tCO_2
5	ການພັດທະນາພະລັງງານທົດແທນຂະໜາດໃຫຍ່	ເພື່ອພັດທະນາພະລັງງານນ້ຳ ທີ່ມີຂະໜາດໃຫ່ຍ ກ່ວາ >15 MW ສະໜອງໃຫ້ບັນດາປະເທດໃກ້ຄຽງ. ແຕ່ນີ້ຮອດ 2020 ການຜະລິດໄຟຟ້າຈະເພີ່ມຂຶ້ນ 2,257 MW ຊຶ່ງເຮັດໃຫ້ ກຳລັງການຜະລິດໃຫ້ໄດ້ທັງໝົດເພີ່ມຂຶ້ນເປັນ ປະມານ 5,500 MW. ນອກຈາກນັ້ນ, ສປປ ລາວ ຍັງມີແຜນພັດທະນາໄຟຟ້າພະລັງງານນ້ຳ ຫຼາຍກວ່າ 20,000 MW ຫຼັງ ປີ 2020.	16.284.074,5 tCO2 (ຮອດ 2020)
6	ຈັດຕັ້ງປະຕິບັດແຜນດຳເນີນງານການປ່ຽນແປງດິນຟ້າອາກາດ	• ເພື່ອສ້າງຄວາມສາມາດ ໃນການຕິດຕາມກວດກາ ແລະ ປະເມີນຜົນ ຂອງການຈັດຕັ້ງ ປະຕິບັດ ພ້ອມທັງກຳນົດທິດທາງ, ຕົວແບບ ແລະ ປັບປຸງຂໍ້ມູນໃນການສ້າງແຜນດຳເນີນງານໃໝ່; • ເພື່ອພັດທະນາ ແລະ ຈັດຕັ້ງປະຕິບັດມາດຕະການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນອາຍພິດເຮືອນແກ້ວ ທີ່ມີລັກສະນະເສດຖະກິດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.	ບັນດາມາດຕະການທີ່ໄດ້ກຳນົດໄວ້ໃນແຜນດຳເນີນງານແມ່ນຈະຊ່ວຍຫຼຸດຜ່ອນອາຍພິດເຮືອນແກ້ວ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃນອະນາຄົດ.

2.2 ຄາດໝາຍສູ້ຊົນ ແລະ ຄວາມອາດສາມາດ ໃນການປະກອບສ່ວນ

ເຖິງແມ່ນວ່າ ສປປ ລາວ ມີການປ່ອຍອາຍພິດເຮືອນແກ້ວພຽງແຕ່ 0,001% ຂອງການປ່ອຍອາຍພິດເຮືອນແກ້ວໃນທົ່ວໂລກ (ປີ 2000) ແລະ ຍັງເປັນປະເທດທີ່ດ້ອຍພັດທະນາ ກໍຕາມ, ແຕ່ ສປປ ລາວ ຍັງມີຄວາມພະຍາຍາມໃນການຈັດຕັ້ງປະຕິບັດບັນດານະໂຍບາຍ ສະໜັບສະໜູນ ເປົ້າໝາຍໄລຍະຍາວ ໃນການຈຳກັດການປ່ອຍອາຍພິດເຮືອນແກ້ວ ໃນທົ່ວໂລກ ທີ່ສອດຄ່ອງ ກັບເປົ້າໝາຍ ຂອງສົນທິສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ ແລະ ຜົນຂອງການສຶກສາໃນບົດລາຍງານ ສະບັບທີ 5 ຂອງ ຄະນະກຳມະການສາກົນ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ. ຄາດໝາຍຂອງ ສປປ ລາວ ໃນການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ສະບັບນີ້ ໄດ້ສັງລວມ ບັນດາການເຄື່ອນໄຫວ ວຽກງານທີ່ເປັນການປະກອບສ່ວນຫຼຸດຜ່ອນ ອາຍພິດເຮືອນແກ້ວ ຢູ່ ສປປ ລາວ ໄປພ້ອມໆກັບບັນດາປະເທດຕ່າງໆ ໃນໂລກ ແລະ ພ້ອມດຽວກັນນີ້ ກໍຍັງເປັນການເຮັດສຳເລັດໜ້າທີ່ຂອງຕົນ ຕາມຂໍ້ຮຽກຮ້ອງ ຂອງກອງປະຊຸມລັດພາຄີສົນທິສັນຍາ ວ່າດ້ວຍການປ່ຽນແປງດິນຟ້າອາກາດ ຄັ້ງທີ 20 ປີ 2014 ຢູ່ເມືອງ ລິມາ, ປະເທດ ເປຣູ ຊຶ່ງໄດ້ຮຽກຮ້ອງ ໃຫ້ບັນດາປະເທດຕ່າງໆ ຕ້ອງມີຄວາມພະຍາຍາມສູງສຸດໃນການດຳເນີນວຽກງານດັ່ງກ່າວ.

ເພື່ອບັນລຸທ່າແຮງໃນການປະກອບສ່ວນຫຼຸດຜ່ອນອາຍພິດເຮືອນແກ້ວໃຫ້ເກີດຜົນປະໂຫຍດສູງສຸດໄປຄຽ່ງຄູ່ກັບການພັດທະນາເສດຖະກິດ-ສັງຄົມ; ສປປ ລາວ ໄດ້ໃຫ້ບຸລິມາສິດ ມາດຕະການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ທີ່ເປັນປະໂຫຍດ ຕໍ່ການພັດທະນາໃນຫຼາຍຂົງເຂດເຊັ່ນ: ການຈັດຕັ້ງປະຕິບັດວຽກງານການປົກປັກຮັກສາປ່າໄມ້ ບໍ່ພຽງແຕ່ເພີ່ມປະລິມານການເກັບກັກອາຍພິດເຮືອນແກ້ວເທົ່ານັ້ນ, ແຕ່ຍັງຊ່ວຍປ້ອງກັນໄພນ້ຳ ຖ້ວມ, ໄພແຫ້ງແລ້ງ, ການເຊາະເຈື່ອນຂອງດິນ ແລະ ດິນຖະຫຼົ່ມ ລວມທັງການຊ່ວຍຫຼຸດຜ່ອນຜົນກະທົບ ຈາກແຜ່ນດິນໄຫວ; ການພັດທະນາການຂົນສົ່ງມວນຊົນ

ບໍ່ພຽງແຕ່ເປັນການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວເທົ່ານັ້ນ, ແຕ່ຍັງເປັນປັດໃຈສຳຄັນ ຕໍ່ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃຫ້ມີຄວາມຍືນຍົງຍິ່ງຂຶ້ນ; ແຜນງານການພັດທະນາໄຟຟ້າໃນເຂດຊົນນະບົດ ບໍ່ພຽງແຕ່ຫຼຸດຜ່ອນອາຍພິດເຮືອນແກ້ວເທົ່ານັ້ນ, ແຕ່ຍັງເປັນການຊຸກຍູ້ສົ່ງເສີມການພັດທະນາຊົນນະບົດ ແລະ ປະກອບສ່ວນຫຼຸດຜ່ອນຄວາມ ທຸກຍາກ. ນອກຈາກນັ້ນ, ການສົ່ງອອກພະລັງງານໄຟຟ້ານ້ຳຕົກສູ່ບັນດາປະເທດໃນພາກພື້ນ ຍັງເປັນການຊ່ວຍພັດທະນາເສດຖະກິດ-ສັງຄົມ ໃຫ້ມີຄວາມຍືນຍົງກ່ວາເກົ່າ ໂດຍສະເພາະແມ່ນການທົດແທນການນຳໃຊ້ຖ່ານຫີນ ແລະ ນ້ຳມັນເຊື້ອໄຟ.

ແຜນງານແຫ່ງຊາດ ກ່ຽວກັບຄາດໝາຍການປະກອບສ່ວນ ໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ສະບັບນີ້ ໄດ້ສັງລວມເອົາບັນດາ ນະໂຍບາຍ ແລະ ແຜນການຕ່າງໆ ທີ່ກຳລັງຈັດຕັ້ງປະຕິບັດ ໂດຍທັງໄດ້ນຳໃຊ້ງົບປະມານ ຂອງ ສປປ ລາວ ແລະ ການສະໜັບສະໜູນຈາກສາກົນ. ສປປ ລາວ ຍັງໄດ້ສົ່ງເສີມການລົງທຶນພາຍໃນ ເພື່ອການຈັດຕັ້ງປະຕິບັດຍຸດທະສາດພະລັງງານທົດແທນ ຊຶ່ງສະແດງໃຫ້ເຫັນວ່າ ສປປ ລາວ ແມ່ນບໍ່ໄດ້ລໍຖ້າການສະໜັບສະໜູນຈາກສາກົນ ພຽງຢ່າງດຽວ ໃນ ການດຳເນີນວຽກງານການປ່ຽນແປງດິນຟ້າອາກາດ. ເຖິງຢ່າງໃດກໍ່ຕາມຍັງມີຫຼາຍວຽກງານ ເປັນຕົ້ນ ວຽກງານການຟື້ນຟູ ແລະ ການປົກປັກຮັກສາປ່າໄມ້ ຍັງເປັນບັນຫາທີ່ທ້າທາຍສົມຄວນຂອງປະເທດ; ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນຢ່າງຍິ່ງ ໃນການຮ່ວມມື ແລະ ຊ່ວຍເຫຼືອຈາກສາກົນ ເປັນຕົ້ນແມ່ນ ການຈັດຕັ້ງປະຕິບັດແຜນງານ ການຫຼຸດຜ່ອນອາຍພິດເຮືອນແກ້ວ ຈາກການທຳລາຍ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມ ລວມທັງການອະນຸລັກ (REDD+) ແລະ ການບັງຄັບໃຊ້ກົດໝາຍ, ການຄຸ້ມຄອງ ແລະ ການຄ້າ ດ້ານປ່າໄມ້ (FLEGT) ໃຫ້ສຳເລັດ. ນອກຈາກນັ້ນ, ຄວາມຕ້ອງການ ການຊ່ວຍເຫຼືອຈາກສາກົນ ຍັງໄດ້ກຳນົດໃນພາກທີ 4 ແລະ ເອກະສານຊ້ອນທ້າຍທີ 1 ຂອງແຜນງານສະບັບນີ້.

3. ມາດຕະການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ

ວິໄສທັດໃນການດຳເນີນການ ວຽກງານການປ່ຽນແປງດິນຟ້າອາກາດ ທີ່ໄດ້ກຳນົດໃນຍຸດທະສາດການປ່ຽນແປງດິນຟ້າອາກາດ ຂອງ ສປປ ລາວ ກໍ່ຄືທີ່ກ່າວໄວ້ໃນພາກທີ 1 ຂອງແຜນງານສະບັບນີ້; ສປປ ລາວ ມີຄວາມມຸ້ງຫວັງສູງເພື່ອເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມ ໄປຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ.

ສຳລັບວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດແມ່ນໄດ້ວາງເປົ້າໝາຍສຳຄັນ ດັ່ງລຸ່ມນີ້:

- ເພີ່ມຄວາມທົນທານ ຂອງຂະແໜງການເສດຖະກິດທີ່ສຳຄັນ ແລະ ຊັບພະຍາກອນທຳມະຊາດ ຕໍ່ບັນຫາ ແລະ ຜົນກະທົບ ຂອງການປ່ຽນແປງດິນຟ້າອາກາດ. ເຊື່ອມສານແນວຄວາມຄິດ ກ່ຽວກັບການ ຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ເຂົ້າໃນຂະແໜງການທີ່ກ່ຽວຂ້ອງ, ບັນດາຍຸດ ທະສາດ, ແຜນດຳເນີນງານ ແລະ ນິຕິກຳ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ;
- ເສີມຂະຫຍາຍການຮ່ວມມື, ການເປັນກຸ່ມພັນທະມິດ ແລະ ການເປັນຄູ່ຮ່ວມງານ ທີ່ເຂັ້ມແຂງ ຮ່ວມ ກັບບັນດາພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນປະເທດ ແລະ ຄູ່ຮ່ວມພັດທະນາສາກົນ ເພື່ອບັນລຸເປົ້າ ໝາຍການພັດທະນາແຫ່ງຊາດ;
- ຍົກລະດັບຄວາມເຂົ້າໃຈ ກ່ຽວກັບການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ແລະ ການສ້າງຈິດສຳນຶກ ຂອງມວນຊົນ ແລະ ພາກສ່ວນຕ່າງໆ ກ່ຽວກັບບັນຫາການປ່ຽນແປງດິນຟ້າອາກາດ, ຄວາມບອບບາງ ແລະ ຜົນກະທົບ

ເພື່ອເພີ່ມບົດບາດການມີສ່ວນຮ່ວມຈາກພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຢ່າງເປັນເຈົ້າການ ແລະ ຮັບປະກັນຊັບພະຍາກອນມະນຸດ ທີ່ມີຄຸນ ນະພາບ.

ສປປ ລາວ ໄດ້ຮັບຜົນກະທົບ ຈາກການປ່ຽນແປງດິນຟ້າອາກາດ ແລະ ປະຊາຊົນ ສ່ວນໃຫຍ່ ຍັງມີຄວາມບອບບາງ ແລະ ຄວາມສ່ຽງສູງ ຕໍ່ການປ່ຽນແປງດິນຟ້າອາກາດ ໂດຍສະເພາະບັນຫາ ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ຍ້ອນວ່າ 70% ຂອງປະຊາຊົນລາວ ແມ່ນອີງໃສ່ຊັບພະຍາກອນທຳມະຊາດ ເພື່ອການດຳລົງຊີວິດ. ວຽກງານບຸລິມະສິດຕົ້ນຕໍແມ່ນ ເພື່ອເພີ່ມຄວາມທົນທານ ຕໍ່ບັນຫາການປ່ຽນແປງດິນຟ້າອາກາດ ຂອງຂະແໜງກະສິກຳ ແລະ ການຄ້ຳປະກັນດ້ານສະບຽງອາຫານ ຊຶ່ງເປັນຂະແໜງທີ່ປະກອບສ່ວນ 29% ຂອງລາຍຮັບແຫ່ງຊາດ ແລະ ປະມານ 70% ຂອງຜົນລະເມືອງລາວ ແມ່ນດຳເນີນວຽກງານທີ່ຕິດພັນກັບຂົງເຂດດັ່ງກ່າວ. ປັບປຸງ ແລະ ຂະຫຍາຍຕາໜ່າງສະຖານນີອຸຕຸ-ອຸທົກກະສາດ, ຮັບປະກັນຂໍ້ມູນອຸຕຸທີ່ຊັດເຈນ, ສ້າງຖານຂໍ້ມູນສະຖິຕິ ກ່ຽວກັບ ການປ່ຽນແປງດິນຟ້າອາກາດທີ່ມີປະສິດທິຜົນ ແລະ ແຜນທີ່ຄວາມສ່ຽງໄພພິບັດໃນທຸກລະດັບ. ວຽກງານບຸລິມະສິດທີ່ສອງແມ່ນເພີ່ມຄວາມທົນທານຂອງຂະແໜງນ້ຳໃນການສະໜອງ ແລະ ການຄຸ້ມຄອງຊັບພະຍາກອນແຫຼ່ງນ້ຳ ເພື່ອຮັບປະກັນການພັດທະນາເສດຖະກິດ, ຊີວິດການເປັນຢູ່ ແລະ ການສະໜອງນ້ຳ ສຳລັບ ການກະສິກຳ, ອຸດສາຫະກຳ ແລະ ພະລັງງານ.

ສປປ ລາວ ມີຄວາມສ່ຽງສູງ ຈາກໄພນ້ຳຖ້ວມ ຊຶ່ງເກີດຂຶ້ນເກືອບທຸກປີ. ໃນນີ້ 14 ໃນ 17 ແຂວງທົ່ວປະເທດ ແລະ ນະຄອນຫຼວງວຽງຈັນ ໄດ້ຮັບຜົນກະທົບຈາກບັນຫາດັ່ງກ່າວ ນັບແຕ່ປີ 1995 ເປັນຕົ້ນມາ. ປະລິມານນ້ຳຝົນມີການປ່ຽນແປງ ບວກກັບ ອຸນຫະພູມທີ່ເພີ່ມຂຶ້ນ ໃນແຕ່ລະປີ ໄດ້ສົ່ງຜົນກະທົບ ຕໍ່ຊັບພະຍາກອນນ້ຳ, ລະບົບນິເວດ ແລະ ການຜະລິດກະສິກຳ. ນອກຈາກນັ້ນ, ໄພນ້ຳຖ້ວມ ຍັງສ້າງຜົນກະທົບ ທີ່ຮ້າຍແຮງ ຕໍ່ບ້ານເຮືອນ, ສຸຂະພາບ, ການສຶກສາ, ອຸດສາຫະກຳ ແລະ ໂຄງລ່າງພື້ນຖານ (ລະບົບການຂົນສົ່ງ, ນ້ຳສະອາດ ແລະ ສຸຂາອະນາໄມ). ຜົນກະທົບຈາກ ໄພນ້ຳຖ້ວມ, ຕົວຢ່າງ ໃນປີ 2005, ໄພນ້ຳຖ້ວມ ໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ຄາດວ່າໄດ້ສ້າງຄວາມເສຍຫາຍ ຕໍ່ດ້ານເສດຖະກິດ ເປັນມູນຄ່າປະມານ 29 ລ້ານ ໂດລະສະຫະລັດ.

ສປປ ລາວ ຍັງໄດ້ປະເຊີນ ກັບໄພແຫ້ງແລ້ງ ຊຶ່ງແກ່ຍາວ ແລະ ຮຸນແຮງເພີ່ມຂຶ້ນ 6 ໃນ 17 ແຂວງທົ່ວປະເທດ ໄດ້ປະສົບກັບ ແລະ ມີຄວາມສ່ຽງສູງ ຕໍ່ໄພແຫ້ງແລ້ງ ແລະ ໄພແຫ້ງແລ້ງ ທີ່ມີຄວາມຮຸນແຮງທີ່ສຸດ ໄດ້ເກີດຂຶ້ນ ໃນປີ 1996, 1998 ແລະ 2003. ໄພແຫ້ງແລ້ງ ໄດ້ສົ່ງຜົນກະທົບ ຕໍ່ ຊັບພະຍາກອນນ້ຳ, ການຜະລິດໄຟຟ້າ ແລະ ການຜະລິດກະສິກຳ, ຊຶ່ງສ້າງຄວາມເສຍຫາຍຕໍ່ເສດຖະກິດໃນວົງກວ້າງ.

ແຜນງານແຫ່ງຊາດ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (2009) ລວມເອົາ ບັນດາແຜນງານ ເພື່ອແກ້ໄຂບັນຫາທີ່ຈຳເປັນ ແລະ ຮີບດ່ວນ ໃນປະຈຸບັນ ທີ່ຕິດພັນກັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃນຂະແໜງ ກະສິກຳ, ປ່າໄມ້, ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ, ສາທາລະນະສຸກ. ແຜນງານປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໄດ້ຜັດທະນາ ແລະ ກຳນົດ ເພີ່ມຕື່ມ ໃນຍຸດທະສາດ ແຫ່ງຊາດ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ແລະ ກວມເອົາ 7 ຂະແໜງເສດຖະກິດທີ່ສຳຄັນ ຄື: ກະສິກຳ, ປ່າໄມ້ ແລະ ການປ່ຽນແປງການນຳໃຊ້ທີ່ດິນ, ຊັບພະຍາກອນນ້ຳ, ຂົນສົ່ງ ແລະ ພະລັງງານ, ການພັດທະນາຕົວເມືອງ, ອຸດສາຫະກຳ ແລະ ສາທາລະນະສຸກ.

ໜຶ່ງໃນຫຼັກການພື້ນຖານ ຂອງຍຸດທະສາດ ແຫ່ງຊາດ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ແມ່ນ ພັດທະນາ ແລະ ສົ່ງເສີມ ມາດຕະການ ທີ່ສາມາດຈັດຕັ້ງປະຕິບັດຮ່ວມກັນ ແລະ ເອື້ອປະໂຫຍດ ຂອງທັງສອງວຽກງານ ການຫຼຸດຜ່ອນອາຍພິດເຮືອນແກ້ວ ແລະ ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ທີ່ມີຕົ້ນທຶນຕ່ຳ, ປັບປຸງ ປະສິດທິພາບການນຳໃຊ້ພະລັງງານ, ສົ່ງເສີມການຜະລິດທີ່ສະອາດ ເຊັ່ນດຽວກັນ ກັບ ການສ້າງຜົນປະໂຫຍດ

ທັງດ້ານເສດຖະກິດ, ສິ່ງແວດລ້ອມ ແລະ ສັງຄົມ. ຕົວຢ່າງ ຢູ່ ສປປ ລາວ ມີທ່າແຮງສູງໃນການພັດທະນາໄຟຟ້າພະລັງງານນ້ຳ ຊຶ່ງເປັນການສະໜອງພະລັງງານທີ່ສະອາດ ແລະ ທັງເປັນໂອກາດໃນການຫຼຸດຜ່ອນອາຍພິດເຮືອນແກ້ວ ແລະ ຍັງຕອບສະໜອງເປົ້າໝາຍອື່ນໆ ເປັນຕົ້ນແມ່ນການຄຸ້ມຄອງໄພນ້ຳຖ້ວມ, ຊົນລະປະທານ ແລະ ການສະໜອງນ້ຳ. ຂະແໜງ ປ່າໄມ້ ໄດ້ປະກອບສ່ວນພັດທະນາເສດຖະກິດແຫ່ງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນລາວ ໂດຍສະເພາະແມ່ນການຄຸ້ມຄອງຊັບພະຍາກອນປ່າໄມ້ແບບຍືນຍົງ ບໍ່ພຽງແຕ່ຊ່ວຍເສີມສ້າງຄວາມທົນທານຂອງ ຊຸມຊົນ ແລະ ລະບົບນິເວດ, ແຕ່ຍັງເປັນການຫຼຸດຜ່ອນອາຍພິດເຮືອນແກ້ວໄປພ້ອມໆກັນ ໂດຍການຊຶມຊັບເອົາອາຍກາກບອນໄດອົກໄຊ.

ເພື່ອຮັບປະກັນການຈັດຕັ້ງປະຕິບັດ ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃຫ້ມີປະສິດທິພາບສູງ, ສປປ ລາວ ຕ້ອງໄດ້ພັດທະນາ ລະບົບຕິດຕາມກວດກາ ແລະ ປະເມີນຜົນ ຊຶ່ງຖືເປັນບັນຫາສຳຄັນ ແລະ ຮີບດ່ວນ. ຕາຕະລາງທີ 2 ລຸ່ມນີ້ ແລະ ເອກະສານຊ້ອນທ້າຍທີ 2 ໄດ້ສັງລວມບັນດາວຽກງານທີ່ເປັນບຸລິມະສິດໃນການສົ່ງເສີມການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ທີ່ໄດ້ກຳນົດໄວ້ໃນຍຸດທະສາດ ແລະ ແຜນດຳເນີນງານແຫ່ງຊາດ ໂດຍອີງໃສ່ສະພາບບັນຫາຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ໃນປະຈຸບັນ ແລະ ຄາດຄະເນໃນຕໍ່ໜ້າ ຢູ່ໃນ ສປປ ລາວ. ບັນດາໜ້າວຽກບຸລິມະສິດເຫຼົ່ານີ້ ແມ່ນຈະໄດ້ສືບຕໍ່ປະເມີນ ແລະ ປັບປຸງ ພາຍຫຼັງທີ່ໄດ້ມີການຕິດຕາມກວດກາ, ປະເມີນຜົນ ແລະ ເມື່ອມີຂໍ້ມູນໃໝ່ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບ.

ຕາຕະລາງທີ 2: ບັນດາໂຄງການຈຸດສຸມ ກ່ຽວກັບ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຢູ່ໃນຂະແໜງການສຳຄັນ

ລ/ດ	ຂະແໜງ	ຈຸດປະສົງ
1	ຂະແໜງກະສິກຳ	• ສົ່ງເສີມຄວາມທົນທານລະບົບການປູກຝັງລ້ຽງສັດ ແລະ ໂຄງລ່າງພື້ນຖານດ້ານກະສິກຳ ຕໍ່ກັບການປ່ຽນແປງດິນຟ້າອາກາດ; • ສົ່ງເສີມເຕັກໂນໂລຊີທີ່ເໝາະສົມສຳລັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.
2	ປ່າໄມ້ ແລະ ການປ່ຽນແປງການນຳໃຊ້ທີ່ດິນ	• ສົ່ງເສີມ ລະບົບນິເວດວິທະຍາປ່າໄມ້ ແລະ ການປູກຕົ້ນໄມ້ ທີ່ມີຄວາມທົນທານຕໍ່ກັບການປ່ຽນແປງດິນຟ້າອາກາດ; • ສົ່ງເສີມ ການສ້າງຄວາມສາມາດທາງດ້ານວິຊາການໃຫ້ແກ່ຂະແໜງ ປ່າໄມ້.
3	ຊັບພະຍາກອນນ້ຳ	• ສ້າງຄວາມເຂັ້ມແຂງລະບົບຂໍ້ມູນຂ່າວສານ ກ່ຽວກັບຊັບພະຍາກອນນ້ຳ ທີ່ຕິດພັນກັນກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ; • ຄຸ້ມຄອງອ່າງໂຕ່ງນ້ຳ ແລະ ດິນບໍລິເວນນ້ຳເພື່ອໃຫ້ມີຄວາມທົນທານຕໍ່ກັບການປ່ຽນແປງດິນຟ້າອາກາດ; • ເພີ່ມທະວີ ການກໍ່ສ້າງ ພື້ນຖານໂຄງລ່າງ ທີ່ຕິດພັນກັບ ຊັບພະຍາກອນນ້ຳ ໃຫ້ມີຄວາມທົນທານ ຕໍ່ກັບການປ່ຽນແປງດິນຟ້າອາກາດ

ລ/ດ	ຂະແໜງ	ຈຸດປະສົງ
		ແລະ ໄພພິບັດທຳມະຊາດ; • ຍົກລະດັບຄວາມສາມາດໃນວຽກງານການປ່ຽນແປງດິນຟ້າອາກາດໃຫ້ແກ່ ຂະແໜງຊັບພະຍາກອນນ້ຳ; • ປັບປຸງ ແລະ ສ້າງຄວາມເຂັ້ມແຂງ ສະຖານນິອຸຕຸ-ອຸທົກກະສາດ ແລະ ຂໍ້ມູນຂ່າວສານທີ່ຕິດພັນກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ.
4	ການຂົນສົ່ງ ແລະ ການພັດທະນາຕົວເມືອງ	• ເພີ່ມທະວີຄວາມທົນທານທາງດ້ານການພັດທະນາຕົວເມືອງ ແລະ ພື້ນຖານໂຄງລ່າງ ຕໍ່ກັບ ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ.
5	ສາທາລະນະສຸກ	• ເພີ່ມທະວີຄວາມທົນທານລະບົບພື້ນຖານໂຄງລ່າງສາທາລະນະສຸກ ແລະ ການສະໜອງນ້ຳສະອາດ ຕໍ່ກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ; • ປັບປຸງການບໍລິການທາງດ້ານ ສາທາລະນະສຸກ ສຳລັບ ການປັບຕົວຕໍ່ກັບການປ່ຽນແປງດິນຟ້າອາກາດ.

4. ຂະບວນການສ້າງ ແລະ ແຜນການຈັດຕັ້ງປະຕິບັດ

ຄາດໝາຍຂອງ ສປປ ລາວ ໃນການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ສະບັບນີ້ ໄດ້ສ້າງຂຶ້ນ ໂດຍໄດ້ມີການປຶກສາຫາລືກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງເປັນຕົ້ນ ຂະແໜງການຕ່າງໆທັງໃນລະດັບສູນກາງ ແລະ ທ້ອງຖິ່ນ, ສະຖາບັນຄົ້ນຄ້ວາ, ອົງການຈັດຕັ້ງສັງຄົມ, ຄູ່ຮ່ວມພັດທະນາ, ພາກສ່ວນເອກະຊົນ ແລະ ພາກສ່ວນອື່ນໆ. ແຫຼ່ງຂໍ້ມູນຕົ້ນຕໍໃນການສ້າງແຜນງານແຫ່ງຊາດສະບັບນີ້ ແມ່ນໄດ້ອີງໃສ່ເອກະສານສຳຄັນເປັນຕົ້ນ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VII (2011-2015) ແລະ ຄັ້ງທີ VIII (2016-2020) ລວມທັງວິໄສທັດຮອດປີ 2030, ຍຸດທະສາດ ແຫ່ງຊາດ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ (2010), ຍຸດທະສາດປ່າໄມ້ຮອດ ປີ 2020 (2005), ຍຸດທະສາດພັດທະນາພະລັງງານທົດແທນ (2011), ຍຸດທະສາດການພັດທະນາລະບົບຂົນສົ່ງແບບຍືນຍົງ (2010), ແຜນດຳເນີນງານແຫ່ງຊາດກ່ຽວກັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (2009), ແຜນດຳເນີນງານແຫ່ງຊາດກ່ຽວກັບການປ່ຽນແປງດິນຟ້າອາກາດ (2013), ບົດສື່ສານແຫ່ງຊາດກ່ຽວກັບການປ່ຽນແປງດິນຟ້າອາກາດ ສະບັບທີ 2 (2013) ແລະ ບົດປະເມີນຄວາມຕ້ອງການດ້ານການເງິນ ສຳລັບຂົງເຂດພະລັງງານ, ກະສິກຳ ແລະ ນ້ຳ ຕໍ່ວຽກງານປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.

ຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ ເປັນຜູ້ຊີ້ນຳລວມ ການຈັດຕັ້ງປະຕິບັດ ແຜນງານປະກອບສ່ວນໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ. ອີງໃສ່ໂຄງຮ່າງການຈັດຕັ້ງ ແລະ ພາລະບົດ ບາດຂອງຄະນະກຳມະການດັ່ງກ່າວ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເສນາທິການ ໃນການປະສານງານກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ແລະ ຮ່ວມມືກັບອົງການຈັດຕັ້ງສາກົນ

ເພື່ອເຂົ້າເຖິງແຫຼ່ງທຶນ ແລະ ສ້າງຄວາມສາມາດ ໃນການຈັດຕັ້ງປະຕິບັດຄາດໝາຍແຫ່ງຊາດດັ່ງກ່າວ ລວມທັງ ການສ້າງ ແລະ ຈັດຕັ້ງປະຕິ ບັດລະບົບຕິດຕາມກວດກາ, ລາຍງານ ແລະ ຢັ້ງຢືນ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈະໄດ້ເຜີຍແຜ່ຄາດໝາຍຂອງ ສປປ ລາວໃນ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ຜົນຂອງກອງປະຊຸມລັດພາຄີສົນທິສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ ຄັ້ງທີ 21 ຕໍ່ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ. ພ້ອມດຽວກັນນີ້, ຄາດໝາຍແຫ່ງຊາດດັ່ງກ່າວ ຈະໄດ້ບັນຈຸເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເພື່ອຮັບປະກັນຄວາມຕໍ່ເນື່ອງໃນການເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດ ເຂົ້າໃນນະໂຍບາຍ ແລະ ແຜນພັດທະນາລວມແຫ່ງຊາດ.

ຄາດໝາຍຂອງ ສປປ ລາວ ໃນການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ຈະໄດ້ຈັດຕັ້ງປະ ຕິບັດໄປຄຽງຄູ່ກັນກັບ ຍຸດທະສາດ ແລະ ແຜນດຳເນີນງານ ແຫ່ງຊາດ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ແລະ ແຜນດຳເນີນງານ ຂອງຂະແໜງການທີ່ກ່ຽວຂ້ອງ. ແຜນດຳເນີນງານແຫ່ງຊາດກ່ຽວກັບ ການປ່ຽນແປງດິນຟ້າອາ ກາດສະບັບ ໃນປະຈຸບັນ ແມ່ນໄດ້ກຳນົດ ຮອດພຽງແຕ່ປີ 2020, ຫຼັງຈາກນັ້ນ ສປປ ລາວ ມີຄວາມຈຳເປັນຕ້ອງໄດ້ສ້າງແຜນງານ ແລະ ຍຸດທະສາດໄລຍະໃໝ່ ກ່ອນປີ 2020 ເພື່ອຮັບປະກັນຄວາມຕໍ່ເນື່ອງຂອງວຽກງານສຳຄັນດັ່ງກ່າວ. ລາຍລະອຽດແຜນຈັດຕັ້ງປະຕິບັດ ສຳລັບມາດຕະການຫຼຸດຜ່ອນອາຍພິດເຮືອນແກ້ວ ແລະ ການປັບຕົວຕໍ່ກັບການປ່ຽນແປງດິນຟ້າອາກາດ ທີ່ໄດ້ກຳນົດ ໃນພາກທີ 2 ແລະ 3 ລວມທັງໄດ້ລະບຸໄວ້ ໃນເອກະສານ ຊ້ອນທ້າຍທີ 1 ແລະ 2 ຕາມລຳດັບ ຂອງຄາດ ໝາຍແຫ່ງຊາດ ສະບັບນີ້.

ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດ ຄາດໝາຍຂອງ ສປປ ລາວ ໃນການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ແຜນດຳເນີນງານ ແຫ່ງຊາດ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ໃຫ້ມີປະສິທິພາບ ແລະ ປະສິດທິຜົນສູງ ແລະ ມີລັກສະນະເສດຖະກິດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈະດຳເນີນ 4 ວຽກງານ ສຳຄັນ ດັ່ງນີ້:

1. ການກຳນົດກົນໄກການປະສານງານ ແລະ ຫຼັກການລວມ ໃນການຈັດຕັ້ງປະຕິບັດ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດກົນໄກການປະສານງານ ແລະຫຼັກ ການລວມ ໃນການຈັດຕັ້ງປະຕິບັດຄາດໝາຍແຫ່ງຊາດດັ່ງກ່າວ ຮ່ວມກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ໃຫ້ມີປະສິດທິຜົນ. ໃນນີ້ຈະຕ້ອງໄດ້ສ້າງຄວາມເຂັ້ມແຂງດ້ານນະໂຍບາຍ ແລະ ຫຼັກການລວມ ໂດຍສະເພາະແມ່ນການສືບຕໍ່ສ້າງກົດໝາຍວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ ໃຫ້ສຳເລັດໃນປີ 2017. ກົດໝາຍນີ້ເປັນການສືບຕໍ່ພັນຂະຫຍາຍບັນດານະໂຍບາຍ ແລະ ແຜນການທີ່ກ່ຽວຂ້ອງກັບວຽກງານການປ່ຽນແປງດິນຟ້າອາກາດ ຊຶ່ງໄດ້ສຳເລັດ ໃນໄລຍະຜ່ານມາ ເປັນຕົ້ນ ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (2012), ກົດໝາຍຜັງເມືອງ ສະບັບປັບປຸງ (1999), ຍຸດທະສາດ ກ່ຽວກັບ ການຄຸ້ມຄອງໄພພິບັດ ຮອດປີ 2020 (2003) ແລະ ຍຸດທະສາດແຫ່ງຊາດ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ (2010).

2. ການສ້າງຄວາມສາມາດ

ວຽກງານການສ້າງຄວາມສາມາດ ແມ່ນເປັນວຽກງານໜຶ່ງທີ່ມີຄວາມຈຳເປັນທີ່ສຸດ ໃນທຸກຂົງເຂດວຽກງານ, ທຸກລະດັບ ນັບຕັ້ງແຕ່ຂັ້ນວິຊາການ ຈົນຮອດຜູ້ວາງນະໂຍບາຍ, ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ. ຕົວຢ່າງ ການສ້າງຄວາມສາມາດໃນວຽກງານຫຼຸດຜ່ອນອາຍພິດເຮືອນແກ້ວ ເປັນຕົ້ນວຽກງານການສຶກສາຄວາມເປັນໄປໄດ້, ການວິເຄາະ ແລະ ພັດທະນາດ້ານນະໂຍບາຍ. ສ່ວນການສ້າງຄວາມສາມາດໃນວຽກງານປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແມ່ນມີຄວາມຮຽກຮ້ອງຕ້ອງການໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈ ຢ່າງເລິກເຊິ່ງ ກ່ຽວກັບ ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ, ມາດຕະການ ແລະ ເຕັກໂນໂລຊີ ໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ເຊັ່ນ : ຊະນິດພັນພືດທີ່ມີຄວາມທົນທານຕໍ່ໄພແຫ້ງແລ້ງ ແລະ ນ້ຳຖ້ວມ, ການຄົ້ນຄວ້າຊະນິດພັນພືດ ແລະ ເຕັກໂນໂລຊີໃໝ່ ລວມທັງຜົນກະທົບຕໍ່ຊຸມຊົນ ແລະ ສິ່ງແວດລ້ອມ.

3. ວຽກງານການເງິນ

ເພື່ອຮັບປະກັນວຽກງານການເງິນແມ່ນມີຄວາມຈຳເປັນຕ້ອງໄດ້ປະຕິບັດ 8 ວຽກງານດັ່ງລຸ່ມນີ້:

1. ການປະເມີນຄວາມຕ້ອງການ, ກຳນົດບູລິມະສິດ ແລະ ຂໍ້ຍຸ້ງຍາກດ້ານການເງິນ;
2. ກຳນົດນະໂຍບາຍ ແລະ ແຫຼ່ງທຶນ;
3. ກຳນົດທິດທາງ ການເຂົ້າເຖິງແຫຼ່ງທຶນຕ່າງໆ;
4. ລວບລວມ ແລະ ຈັດສັນແຫຼ່ງທຶນຕ່າງໆ ເພື່ອຈັດຕັ້ງປະຕິບັດ;
5. ສ້າງບົດສະເໜີໂຄງການ, ແຜນງານ ໃນແຕ່ລະຂະແໜງ ແລະ ກຳນົດວິທີການ ເພື່ອເຂົ້າເຖິງແຫຼ່ງທຶນ;
6. ຈັດຕັ້ງປະຕິບັດ ແລະ ບໍລິຫານໂຄງການ;
7. ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງລະບົບປະສານງານບັນດາໂຄງການຕ່າງໆ;
8. ການຕິດຕາມກວດກາ, ລາຍງານ ແລະ ຢັ້ງຢືນ (MRV); ການຕິດຕາມກວດກາ ແລະ ປະເມີນຜົນ (M&E) ກ່ຽວກັບການເງິນທີ່ຕິດພັນກັບວຽກງານການປ່ຽນແປງດິນຟ້າອາກາດ.

ສຳລັບວຽກງານການປ່ຽນແປງດິນຟ້າອາກາດ ໂດຍສະເພາະແລ້ວ ແມ່ນວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ສປປ ລາວ ໄດ້ມີຄວາມພະຍາຍາມ ແລະ ຈັດສັນງົບປະມານ ຈຳນວນ 12,5 ລ້ານໂດລາສະຫະລັດ ຫຼື ປະມານ 0,14% ຂອງລາຍຮັບສະເລ່ຍຕໍ່ຫົວຄົນຕໍ່ປີ ຂອງປີ 2012. ເຖິງຢ່າງໃດກໍ່ຕາມ ເພື່ອຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນອາຍພິດເຮືອນແກ້ວ ແລະ ມາດຕະການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາ, ສປປ ລາວ ຍັງມີຄວາມຈຳເປັນ ທີ່ຕ້ອງໄດ້ຮັບການສະໜັບສະໜູນຈາກສາກົນ ໂດຍສະເພາະແມ່ນ ດ້ານການເງິນ, ການຖ່າຍທອດເຕັກໂນໂລຊີ ແລະ ການສ້າງຄວາມສາມາດ. ຄາດຄະເນງົບປະມານທັງໝົດ ໃນເບື້ອງຕົ້ນ ສຳລັບການດຳເນີນວຽກງານການຫຼຸດຜ່ອນອາຍພິດເຮືອນແກ້ວ ຈຳນວນປະມານ 1.423,75 ລ້ານໂດລາສະຫະລັດ ແລະ ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຈຳນວນປະມານ 968,18 ລ້ານໂດລາສະຫະລັດ. ລາຍລະອຽດສຳລັບວຽກງານ ຫຼຸດຜ່ອນອາຍພິດເຮືອນແກ້ວ ແລະ ວຽກງານການປັບຕົວເຂົ້າ ກັບການປ່ຽນແປງດິນຟ້າອາກາດ ໄດ້ລະບຸໃນເອກະສານຊ້ອນທ້າຍທີ່ 1 ແລະ 2 ຕາມລຳດັບ.

4. ການຕິດຕາມກວດກາ, ລາຍງານ ແລະ ຢັ້ງຢືນ ໃນການຈັດຕັ້ງປະຕິບັດ.

ວຽກງານຕິດຕາມກວດກາ, ລາຍງານ ແລະ ຢັ້ງຢືນ ໃນການຈັດຕັ້ງປະຕິບັດ ເປັນເຄື່ອງມືໜຶ່ງທີ່ສຳຄັນ ເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ ຊຶ່ງລະບົບດັ່ງກ່າວ ສາມາດສະແດງໃຫ້ເຫັນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນງານ, ທັງເປັນການສະໜອງຂໍ້ມູນທີ່ເປັນປະໂຫຍດ ເພື່ອໃຊ້ໃນການທອດຖອນບົດຮຽນ ສຳລັບການພັດທະນາໂຄງການໃນອານາຄົດ. ເຖິງຢ່າງໃດກໍ່ຕາມ, ສປປ ລາວ ຍັງຈຳກັດ ແລະ ຕ້ອງການ ການພັດທະນາ ຄວາມສາມາດກ່ຽວກັບ ລະບົບ ການຕິດຕາມກວດກາ, ລາຍງານ ແລະ ຢັ້ງຢືນ ເພື່ອສາມາດ ປະເມີນຜົນສຳເລັດຂອງການຈັດຕັ້ງປະຕິບັດ ແຜນງານແຫ່ງຊາດ ກ່ຽວກັບຄາດໝາຍການປະກອບສ່ວນ ໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ໂດຍສະເພາະແມ່ນ ລະບົບ ການຕິດຕາມກວດກາ, ລາຍງານ ແລະ ຢັ້ງຢືນ ການສຳຫຼວດອາຍພິດເຮືອນແກ້ວ, ການຫຼຸດຜ່ອນອາຍພິດເຮືອນແກ້ວ ຕາມສະພາບ ແລະ ເງື່ອນໄຂຂອງປະເທດ (NAMA), ຕົວຊີ້ບອກ ສຳລັບການປະເມີນຜົນສຳລັບການປ່ຽນແປງດິນຟ້າອາກາດ ແລະ ລະບົບຕິດຕາມ ການເງິນທີ່ຕິດພັນກັບວຽກງານປ່ຽນແປງດິນຟ້າອາກາດ. ເພື່ອພັດທະນາ ລະບົບ ການຕິດຕາມກວດກາ, ລາຍງານ ແລະ ຢັ້ງຢືນ, ສປປ ລາວ ຈຳເປັນຕ້ອງໄດ້ດຳເນີນ 2 ວຽກງານທີ່ຈຳເປັນ ດັ່ງນີ້:

- **ການປະເມີນຄວາມພ້ອມ:** ວຽກງານນີ້ ລວມເອົາການປະເມີນດ້ານ: ສະພາບ ແລະ ບັນຫາ ຂໍ້ມູນ;ການຈັດຕັ້ງ ແລະ ຄວາມສາມາດ ຂອງບຸກຄະລາກອນ; ນະໂຍບາຍແຫ່ງຊາດ; ລະບົບຕິດຕາມກວດກາ, ລາຍງານ ແລະ ຢັ້ງຢືນ ທີ່ມີຢູ່;
- **ການສ້າງຄວາມສາມາດ:** ພາຍຫຼັງທີ່ ໄດ້ສຳເລັດວຽກງານການປະເມີນຄວາມພ້ອມ ແມ່ນຈະໄດ້ສືບຕໍ່ສ້າງ ແລະ ຈັດຕັ້ງປະຕິບັດ ແຜນພັດທະນາ ຄວາມສາມາດ ລວມທັງ ປະກອບເຄື່ອງມື ເພື່ອເຮັດໃຫ້ການດຳເນີນວຽກງານ ການຕິດຕາມກວດກາ, ລາຍງານ ແລະ ຢັ້ງຢືນ ມີລັກສະນະຄົບຊຸດ.

ເອກະສານຊ້ອນທ້າຍທີ 1: ຕາຕະລາງສັງລວມມາດຕະການຫຼຸດຜ່ອນອາຍພິດເຮືອນແກ້ວ

ບັນດາໜ້າວຽກທີ່ໄດ້ກຳນົດ ໃນເອກະສານຊ້ອນທ້າຍເຫຼົ່ານີ້ ແມ່ນຊີ້ໃຫ້ເຫັນການຄາດຄະເນ ຂອງການລົງທຶນ ຊຶ່ງການຄາດຄະເນດັ່ງກ່າວ ແມ່ນຍັງມີຄວາມຈຳເປັນສືບຕໍ່ຄົ້ນຄວ້າ ໃນຂັ້ນຕອນຕໍ່ໄປ ຂອງການຈັດຕັ້ງປະຕິບັດ ຄາດໝາຍແຫ່ງຊາດ ສະບັບນີ້.

ບັນລຸເປົ້າໝາຍ ທີ່ໄດ້ກຳນົດໄວ້ໃນຍຸດທະສາດປ່າໄມ້ ຮອດປີ 2020	
ລາຍລະອຽດ	ຕົ້ນໄມ້ ແລະ ປ່າໄມ້ແມ່ນແຫຼ່ງຊຶມຊັບ ອາຍພິດເຮືອນແກ້ວ ຕົວຢ່າງ: ການດູດເອົາອາຍ ກາກບອນໄດອົກໄຊ. ປ່າໄມ້ ຍັງຮັກສາຄຸນນະພາບຂອງດິນ, ຊ່ວຍຫຼຸດຜ່ອນຄວາມສ່ຽງຕໍ່ການເກີດໄພນ້ຳຖ້ວມ ແລະ ການເຊາະເຈື່ອນຂອງດິນ. ການເພີ່ມເນື້ອທີ່ການປົກຫຸ້ມ ແລະ ບຳລຸງຮັກສາ ປ່າໄມ້ທັງໝົດ ຍັງເປັນປະໂຫຍດສຳຄັນຕໍ່ການຫຼຸດຜ່ອນຜົນກະທົບຈາກອາຍພິດເຮືອນແກ້ວ ແລະ ເປັນປະໂຫຍດຕໍ່ການພັດທະນາໃນຫຼາຍຂົງເຂດ.
ຈຸດປະສົງ	ເພື່ອເພີ່ມເນື້ອທີ່ປົກຫຸ້ມຂອງປ່າໄມ້ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດ (ປະມານ 16.58 ລ້ານເຮັກຕາ). ພາຍຫຼັງບັນລຸເປົ້າໝາຍດັ່ງກ່າວ ການຫຼຸດຜ່ອນອາຍພິດເຮືອນແກ້ວ ແມ່ນຍັງຈະສືບຕໍ່ດຳເນີນຕໍ່ໄປພາຍຫຼັງປີ 2020.
ປີພື້ນຖານໃນການຄິດໄລ່	ກຳນົດເອົາປີ 2000
ວິທີການປະເມີນການຄາດຄະເນການປ່ອຍ ແລະ ຊຶມຊັບ ອາຍພິດເຮືອນແກ້ວໃນອະນາຄົດ	ອີງໃສ່ຂໍ້ມູນການສຳຫຼວດການປ່ອຍອາຍພິດເຮືອນແກ້ວ ໃນປີ 2000 ເພື່ອເປັນພື້ນຖານໃນການຄິດໄລ່ ດັ່ງທີ່ໄດ້ກຳນົດໃນພາກທີ 4, ຂໍ້ 4.4.2 ແລະ 4.4.5 ຂອງບົດສື່ສານແຫ່ງຊາດ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ສະບັບທີ 2 (ປີ 2013). ການຄາດຄະເນການປ່ຽນແປງເນື້ອທີ່ປ່າຜະລິດ, ປ້ອງກັນ, ປ່າສະຫງວນ ແລະ ປ່າປູກ ໃນອະນາຄົດໄດ້ ນຳໃຊ້ ວິທີການຄິດໄລ່ທາງດ້ານສະຖິຕິ (regression model) ຊຶ່ງ ອີງໃສ່ ສາຍພົວພັນກັນລະຫວ່າງປະຊາກອນ ແລະ ມີການປ່ຽນແປງເນື້ອທີ່ປ່າໄມ້ ໃນປີ 1982, 1992, 2002 ແລະ 2010; ຜົນຂອງການປະເມີນ ສະແດງໃຫ້ ເຫັນວ່າ ເນື້ອທີ່ ປ່າໄມ້ມີແນວໂນ້ມຈະຫຼຸດລົງ ປະມານ 1,24% ຂອງເນື້ອທີ່ປ່າໄມ້ໃນຊ່ວງໄລຍະປີ 2011-2015 ຖ້າອັດຕາການເຕີບໂຕຂອງປະຊາກອນຢູ່ໃນລະດັບ 1,9% ແລະ ເນື້ອທີ່ປ່າໄມ້ໃນຊ່ວງໄລຍະປີ 2016-2020 ຈະຫຼຸດລົງ 0,85% ຖ້າອັດຕາການເຕີບໂຕຂອງປະຊາກອນຢູ່ໃນລະດັບ 1,4% (ຕາມການຄາດຄະເນຂອງສູນສະຖິຕິແຫ່ງຊາດ 2005). ອີງຕາມສະພາບການຄຸ້ມຄອງ ປ່າໄມ້ໃນປັດຈຸບັນ (Business As Usual "BAU") ຈະເຫັນໄດ້ວ່າເນື້ອທີ່ປ່າໄມ້ ໃນປີ 2015 ແມ່ນຈະຍັງເຫຼືອ 9.03 ລ້ານ ເຮັກຕາ ແລະ ຍັງຈະສືບຕໍ່ຫຼຸດລົງເຫຼືອພຽງ 8,66 ລ້ານ ເຮັກຕາ ໃນປີ 2020; ເພື່ອບັນລຸຄາດໝາຍເນື້ອທີ່ປ່າໄມ້ ທີ່ຕັ້ງໄວ້ຄື: 65% ຂອງເນື້ອທີ່ທົ່ວປະເທດໃນປີ 2015 ແລະ 70% ໃນປີ 2020 ຫຼື ປະມານ 16,576 ລ້ານ ເຮັກຕາ. ໝາຍຄວາມວ່າ ຈຳເປັນຕ້ອງໄດ້ປົກປັກຮັກສາເນື້ອທີ່ປ່າທັງໝົດທີ່ມີໃນປະຈຸບັນ ປະມານ 9.614 ລ້ານ

ບັນລຸເປົ້າໝາຍ ທີ່ໄດ້ກຳນົດໄວ້ໃນຍຸດທະສາດປ່າໄມ້ ຮອດປີ 2020	
	ເຮັກຕາ ແລະ ຈຳເປັນຕ້ອງໄດ້ຟື້ນຟູ ເນື້ອທີ່ປ່າ 6.7513 ລ້ານ ເຮັກຕາ ຈາກ 2010 ຫາ 2020. ສຳລັບປ່າປູກ, ຖ້າສືບຕໍ່ປະຕິບັດການ ສົ່ງເສີມ ແລະ ຄຸ້ມຄອງປ່າໄມ້ແບບສະພາບການປະຈຸບັນ (BAU), ການຂະຫຍາຍຕົວຂອງປ່າປູກ ຈະເພີ່ມຂຶ້ນ ພຽງແຕ່ ປະມານ 4% ຫຼື 47,993 ຮຕ ໃນປີ 2015 ແລະ 57,992 ຮຕ ໃນປີ 2020. ແຕ່ ຕາມແຜນຍຸດທະສາດປ່າໄມ້ຮອດປີ2020, ລັດຖະບານ ໄດ້ວາງຄາດໝາຍ ເພີ່ມເນື້ອທີ່ປ່າປູກໃຫ້ໄດ້ 500.000 ຮຕ ໃນປີ 2020. ໝາຍຄວາມວ່າ ເພື່ອບັນລຸຄາດໝາຍ ເນື້ອທີ່ປ່າປູກ, ຈະຕ້ອງໄດ້ ສົ່ງເສີມ ປ່າປູກໃຫ້ສາມາດເພີ່ມຂຶ້ນໃນລະດັບ 14,69% ຕໍ່ປີ ນັບແຕ່ 2008.
ຄາດຄະເນປະລິມານການຫຼຸດຜ່ອນອາຍພິດເຮືອນແກ້ວ	ຖ້າມາດຕະການເຫຼົ່ານີ້ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ, ສປປ ລາວ ບັນລຸເປົ້າໝາຍການເພີ່ມຂຶ້ນ ຂອງເນື້ອທີ່ປົກຫຸ້ມຂອງປ່າໄມ້ 70% (ປະມານ 16,58 ລ້ານເຮັກຕາ) ພ້ອມກັບການເພີ່ມຂຶ້ນຂອງເນື້ອທີ່ປ່າປູກ 500.000 ເຮັກຕາ, ການຕັດໄມ້ ແລະ ການຫັນປ່ຽນປ່າໄມ້ ແມ່ນຢູ່ພາຍໃຕ້ການຄຸ້ມຄອງຈົນເຖິງປີ 2020; ຕາມການຄາດຄະເນປ່າໄມ້ຂອງ ສປປ ລາວ ຈະສາມາດຫຼຸດຜ່ອນອາຍພິດເຮືອນແກ້ວໄດ້ປະມານ 69.183.340 ໂຕນ ການກອນໄດອອກໄຊ (tCO_{2e}) ຕໍ່ປີ ໃນປີ 2020.
ແຜນການເພື່ອບັນລຸເປົ້າໝາຍ	• ຈັດຕັ້ງປະຕິບັດຕາມແຜນການ ທີ່ໄດ້ວາງໄວ້ໃນຍຸດທະສາດປ່າໄມ້ແຕ່ນີ້ເຖິງປີ 2020. ກ່ອນສິ້ນສຸດການຈັດຕັ້ງປະຕິບັດຍຸດທະສາດປ່າໄມ້ປີ 2020 ສປປ ລາວ ຕ້ອງໄດ້ສ້າງຍຸດທະສາດປ່າໄມ້ ສະບັບໃໝ່ ເພື່ອເປັນການວາງມາດຕະການຄຸ້ມຄອງປ່າໄມ້ໃຫ້ຍືນຍົງ; • ຈັດຕັ້ງປະຕິບັດແຜນງານ ການຫຼຸດຜ່ອນອາຍພິດເຮືອນແກ້ວຈາກການທຳລາຍ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມ ລວມທັງການອະນຸລັກ (REDD+) ໄດ້ກຳນົດກອບໜ້າວຽກ ສຳລັບການຈັດຕັ້ງປະຕິບັດວຽກງານຫຼຸດຜ່ອນອາຍພິດເຮືອນແກ້ວ ໃນຂະແໜງການປ່າໄມ້; • ນັບແຕ່ປີ 2007. ໃນຕົ້ນປີ 2009 ໂຄງການທົດລອງ ແລະ ກິດຈະກຳ ທີ່ກ່ຽວຂ້ອງ ຂອງແຜນງານ REDD+ ໄດ້ຮັບການສະໜັບສະໜູນ ຈາກຄູ່ຮ່ວມພັດທະນາ ໃນການລິເລີ່ມໂຄງການ ແລະ ໃນປີ 2010 ສປປ ລາວ ໄດ້ເປັນປະເທດທຳອິດ ທີ່ດຳເນີນໂຄງການທົດລອງພາຍໃຕ້ແຜນງານຄູ່ຮ່ວມການລົງທຶນດ້ານປ່າໄມ້ (FIP) ຊຶ່ງເປັນແຜນງານຫຼາຍຝ່າຍພາຍໃຕ້ກອງທຶນ ການລົງທຶນຂອງການປ່ຽນແປງດິນຟ້າອາກາດ (CIFs); • ຈັດຕັ້ງປະຕິບັດສັນຍາຄູ່ຮ່ວມການຄ້າໄມ້ແບບສະໝັກໃຈ (VPA) ຊຶ່ງເປັນເອກະສານການຄ້າສອງຝ່າຍ ລະຫວ່າງ ສະຫະພາບເອີຣົບ ແລະ ປະເທດທີ່ສົ່ງອອກໄມ້ທີ່ຢູ່ນອກສະຫະພັນເອີຣົບ, ຊຶ່ງລັດຖະບານ ສປປ ລາວ ໄດ້ປະກາດຄວາມສົນໃຈໃນການເຈລະຈາສັນຍາຄູ່ຮ່ວມການຄ້າໄມ້ແບບສະໝັກໃຈ (VPA) ໃນເດືອນກຸມພາ ປີ 2012; • ສືບຕໍ່ດຳເນີນການບັງຄັບໃຊ້ກົດໝາຍວ່າດ້ວຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າ (FLEGT) ຊຶ່ງໄດ້ຮັບການສະໜັບສະໜູນ

ບັນລຸເປົ້າໝາຍ ທີ່ໄດ້ກຳນົດໄວ້ໃນຍຸດທະສາດປ່າໄມ້ ຮອດປີ 2020	
	ຈາກອົງການຮ່ວມມືສາກົນຂອງປະເທດເຢຍລະມັນ (GIZ) ນັບແຕ່ ເດືອນຕຸລາ 2013.
ອຸປະສັກຕົ້ນຕໍສຳລັບຈັດຕັ້ງປະຕິບັດ	• ລະບົບການຄຸ້ມຄອງປ່າໄມ້ໃນປັດຈຸບັນ ລວມທັງການບັງຄັບໃຊ້ກົດໝາຍ ຍັງບໍ່ມີປະສິດທິຜົນເທົ່າທີ່ຄວນ ໂດຍສະເພາະຕໍ່ການຂຸດຄົ້ນໄມ້ ແລະ ການຫັນປ່ຽນປ່າໄມ້ສຳລັບໂຄງການພັດທະນາຕ່າງໆ, ການເກັບລາຍຮັບ ແລະ ການຄຸ້ມຄອງກອງທຶນປ່າໄມ້; • ລະບົບການກວດກາປ່າໄມ້ ຍັງບໍ່ເປັນລະບົບ ແລະ ການບັງຄັບໃຊ້ ຍັງບໍ່ມີປະສິດທິຜົນເທົ່າທີ່ຄວນ; • ງົບປະມານ ແລະ ຄວາມສາມາດ ໃນການສຳຫຼວດປ່າໄມ້, ການຈັດສັນ ແລະ ການຟື້ນຟູປ່າໄມ້ ຍັງມີຂີດຈຳກັດ; • ຄວາມທຸກຍາກ ແລະ ຂໍ້ຈຳກັດທາງເລືອກສຳລັບການດຳລົງຊີວິດ ແມ່ນເປັນສາເຫດໜຶ່ງ ທີ່ນຳໄປສູ່ການບຸກລຸກປ່າໄມ້; • ນະໂຍບາຍ ແລະ ຂໍ້ແນະນຳ ໃນການສົ່ງເສີມການຟື້ນຟູ ແລະ ການປູກປ່າ ຍັງບໍ່ທັນຈະແຈ້ງ ຫຼື ຍັງບໍ່ທັນພຽງພໍ.
ຄວາມຈຳເປັນໃນການສະໜັບສະໜຸນ	**ການສ້າງຄວາມສາມາດ, ການຖ່າຍທອດ ເຕັກໂນໂລຊີ ແລະ ການສະໜັບສະໜຸນດ້ານການເງິນ ຕໍ່ວຽກງານ ລຸ່ມນີ້:** • ການບັງຄັບໃຊ້ກົດໝາຍ; • ລະບົບຕິດຕາມ ແລະ ກວດກາ ປ່າໄມ້; • ການຟື້ນຟູ ແລະ ການປູກປ່າ; • ການຄຸ້ມຄອງປ່າໄມ້ ຊຸມຊົນ ແບບຍືນຍົງ ແລະ ການກະສິກຳແບບປະສົມປະສານກັບການປູກໄມ້ ເພື່ອຫຼຸດຜ່ອນ ຄວາມທຸກຍາກ ແລະ ອາຍພິດເຮືອນແກ້ວ; • ນະໂຍບາຍສຳລັບການລົງທຶນ ຕໍ່ການຟື້ນຟູປ່າໄມ້; • ລະບົບ ການສຳຫຼວດ ແລະ ການຈັດສັນ ປ່າໄມ້; • ການຄົ້ນຄ້ວາ ກ່ຽວກັບ ລະບົບນິເວດ ປ່າໄມ້, ເສດຖະກິດ ແລະ ບົດຮຽນທີ່ດີເລີດ ທີ່ກ່ຽວຂ້ອງກັບການຫຼຸດຜ່ອນອາຍພິດເຮືອນແກ້ວ.
ຄາດຄະເນງົບປະມານ	ງົບປະມານຈຳນວນ 180 ລ້ານ ໂດລາ ສະຫະລັດ ທີ່ຄາດຄະເນ ຈະນຳໃຊ້ເຂົ້າໃນການຄຸ້ມຄອງປ່າໄມ້ ໂດຍ 1 ເຮັກຕາ ເທົ່າກັບ 10.84 ໂດລາ ສະຫະລັດ ຊຶ່ງໃນງົບປະມານ ດັ່ງກ່າວ ແມ່ນບໍ່ໄດ້ລວມເອົາມູນຄ່າການປູກປ່າ. ສະນັ້ນ, ຈຶ່ງເຮັດໃຫ້ງົບປະມານທັງໝົດ ມີມູນຄ່າຕ່ຳ.

ຍຸດທະສາດພັດທະນາພະລັງງານທົດແທນ	
ລາຍລະອຽດ	ຍຸດທະສາດພະລັງງານທົດແທນ (2011) ໄດ້ກຳນົດແຜນວຽກເພື່ອເພີ່ມການນຳໃຊ້ເຂື່ອນໄຟຟ້າຂະໜາດນ້ອຍ (ຕ່ຳກວ່າ 15 MW), ພະລັງງານແສງຕາເວັນ, ຊີວະມວນ, ແກ໊ສຊີວະພາບ, ການນຳໃຊ້ສິ່ງເສດເຫຼືອເພື່ອເປັນພະລັງງານ ແລະ ພະລັງງານລົມ ລວມທັງ

ຍຸດທະສາດພັດທະນາພະລັງງານທົດແທນ	
	ການນຳໃຊ້ນ້ຳມັນເຊື້ອໄຟຕ່າງໆ ສຳລັບ ການຂົນສົ່ງ (ແກ໊ສເອຕາໂນນ ແລະ ນ້ຳມັນຊີວະພາບ) ເພື່ອສະໜອງພະລັງງານທີ່ສະອາດໃຫ້ແກ່ຜູ້ຊົມໃຊ້.
ຈຸດປະສົງ	• ເພື່ອເພີ່ມອັດຕາສ່ວນຂອງພະລັງງານທົດແທນໃຫ້ໄດ້ 30% ຂອງການຊົມໃຊ້ພະລັງງານທັງໝົດໃນປີ 2025; • ເພື່ອເພີ່ມອັດຕາສ່ວນຂອງນ້ຳມັນຊີວະພາບໃຫ້ 10% ຂອງຄວາມຕ້ອງການນຳໃຊ້ນ້ຳມັນເຊື້ອໄຟ ສຳລັບຂະແໜງຂົນສົ່ງ ໃນປີ 2025.
ປີພື້ນຖານໃນການຄິດໄລ່	ກຳນົດເອົາປີ 2011
ວິທີການປະເມີນການຄາດຄະເນການປ່ອຍ ແລະ ຊຶມຊັບ ອາຍພິດເຮືອນແກ້ວໃນອະນາຄົດ	ອີງໃສ່ ການຄາດຄະເນ ມູນຄ່າການຫຼຸດຜ່ອນອາຍພິດເຮືອນແກ້ວ ຂອງ ພະລັງງານທົດແທນ ຕໍ່ຫົວໜ່ວຍການຫຼຸດຜ່ອນ ໂຕນການກອນໄດອົກໄຊ. ສປປ ລາວ ຍັງມີຄວາມຈຳເປັນໃນການສ້າງຄວາມສາມາດ ເພື່ອຄາດຄະເນ ສະພາບການນຳໃຊ້ພະລັງງານ ແລະ ການຫຼຸດຜ່ອນການປ່ອຍ (BAU) ຊຶ່ງມັນສາມາດເປັນໄປໄດ້ ໃນການຈັດຕັ້ງປະຕິບັດ ວຽກງານນີ້.
ຄາດຄະເນປະລິມານການຫຼຸດຜ່ອນອາຍພິດເຮືອນແກ້ວ	478.000.000 ໂຕນການກອນໄດອົກໄຊ ໃນລະຫວ່າງ 2015 ຫາ 2020 ແລະ 770.000.000 ໂຕນການກອນໄດອົກໄຊ ໃນລະຫວ່າງປີ 2020 ຫາ 2025.
ແຜນການເພື່ອບັນລຸເປົ້າໝາຍ	ຍຸດທະສາດພະລັງງານທົດແທນ (ປີ 2011). ກະຊວງພະລັງງານ ແລະ ບໍ່ແຮ່ ແມ່ນພາກສ່ວນຕົ້ນຕໍໃນການຮັບຜິດຊອບການປະສານງານ ສຳລັບພະລັງງານທົດແທນ ຊຶ່ງມີໜ້າທີ່ຕົ້ນຕໍ ດັ່ງລຸ່ມນີ້: • ພັດທະນານະໂຍບາຍລວມ ກ່ຽວກັບ ພະລັງງານທົດແທນ ແລະ ສະໜັບສະໜູນຜົນສຳເລັດ ເປົ້າໝາຍການພັດທະນາແບບຍືນຍົງ; • ວາງຈຸດປະສົງ ແລະ ເປົ້າໝາຍ ໂດຍອີງໃສ່ທ່າແຮງ ດ້ານງົບປະມານ ແລະ ພັດທະນາຖານຂໍ້ມູນພະລັງງານທົດແທນ; • ສືບຕໍ່ການສຶກສາ ແລະ ໂຄງການສາທິດ ກ່ຽວກັບການນຳໃຊ້ ເຕັກໂນໂລຊີພະລັງງານທົດແທນ. ພ້ອມກັນນັ້ນ, ບັນດາຂະແໜງການ ກ່ຽວຂ້ອງມີຄວາມຮັບຜິດຊອບພາຍໃຕ້ຍຸດທະສາດ ພະລັງງານທົດແທນ: • ກະຊວງ ກະສິກຳ ແລະ ປ່າໄມ້ ໂດຍການປະສານສົມທົບກັບ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນ ໃນການກຳນົດ ແລະ ພັດທະນານະໂຍບາຍ ທີ່ກ່ຽວຂ້ອງກັບການນຳໃຊ້ທີ່ດິນໃຫ້ມີປະສິດທິພາບ ສຳລັບອຸດສາຫະກຳ ແລະ ການປູກຝຶດ ເພື່ອຜະລິດພະລັງງານທົດແທນ, ສືບຕໍ່ການວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ ແລະ ການຈັດສັນເຂດນຳໃຊ້ທີ່ດິນຂອງທ້ອງຖິ່ນ, ການຕິດຕາມ ແລະ ບັງຄັບໃຊ້ ການຈັດຕັ້ງປະຕິບັດ ນະໂຍບາຍ; • **ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ** ມີໜ້າທີ່ຮັບຜິດຊອບການຄົ້ນຄວ້າ ກ່ຽວກັບ ການນຳໃຊ້ຊັບພະຍາກອນນ້ຳ ໂດຍປະສານສົມທົບກັບກະຊວງພະລັງງານ ແລະ ບໍ່ແຮ່ ໃນການສຶກສາ ກ່ຽວກັບ

ການຜະລິດເຊື້ອໄຟໄຮໂດຣເຈນ. ນອກຈາກນັ້ນ, ຍັງຮັບຜິດຊອບໃນການພັດທະນາ ແລະ ການບັງຄັບໃຊ້ ບົດແນະນຳ ເພື່ອຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຂອງການພັດທະນາພະລັງງານທົດແທນ ໂດຍຜ່ານການສຶກສາເບື້ອງຕົ້ນ ກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

- **ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ** ມີໜ້າທີ່ຮັບຜິດຊອບໃນການດຳເນີນການຄົ້ນຄວ້າ ແລະ ທົດລອງ ວິທະຍາສາດ ແລະ ເຕັກໂນໂລຊີ ກ່ຽວກັບການນຳໃຊ້ພະລັງງານທົດແທນ ທີ່ໄດ້ຮັບການພັດທະນາ ຈາກບັນດາປະເທດຕ່າງໆ;
- **ກະຊວງ ອຸດສາຫະກຳ ແລະ ການຄ້າ** ມີໜ້າທີ່ຮັບຜິດຊອບໃຫ້ຄວາມສະດວກໃນການນຳເຂົ້າອຸປະກອນ ແລະ ເຄື່ອງຈັກ, ແນວພັນ ແລະ ພາຫະນະ ທີ່ກ່ຽວຂ້ອງກັບການພັດທະນາ ພະລັງງານທົດແທນ ພ້ອມດຽວກັນນັ້ນກໍສະໜັບສະໜູນການສ້າງປ້ຳນ້ຳມັນຊີວະພາບ;
- **ກະຊວງ ໂຍທາທິການ ແລະ ຂົນສົ່ງ** ມີໜ້າທີ່ຮັບຜິດຊອບໃນການແນະນຳນະໂຍບາຍຕ່າງໆ ທີ່ເປັນການສົ່ງເສີມການນຳໃຊ້ນ້ຳມັນເຊື້ອໄຟທາງເລືອກສຳລັບພາຫະນະສ່ວນບຸກຄົນ, ລະບົບຂົນສົ່ງສາທາລະນະ, ການຂົນສົ່ງທາງບົກ ແລະ ທາງອາກາດ;
- **ກະຊວງ ການເງິນ** ມີໜ້າທີ່ຮັບຜິດຊອບໃນການກຳນົດນະໂຍບາຍ ອາກອນ ແລະ ພາສີ ສຳລັບການນຳໃຊ້ທີ່ດິນ, ພາຫະນະ ແລະ ອຸປະກອນ ເພື່ອຈະນຳໃຊ້ເຂົ້າໃນໂຄງການພະລັງງານທົດແທນ ພ້ອມດຽວກັນນີ້ກໍຊ່ວຍເຫຼືອ ໃນການເພີ່ມງົບປະ ມານ ສຳລັບການພັດທະນາພະລັງງານທົດແທນ;
- **ທະນາຄານກາງແຫ່ງ ສປປ ລາວ** ມີໜ້າທີ່ຮັບຜິດຊອບໃນການພິຈາລະນາ ກ່ຽວກັບສິນເຊື່ອການກູ້ຢືມ ແລະ ອັດຕາກູ້ຢືມດອກເບ້ຍຕ່ຳ ເຊິ່ງເປັນແຫຼ່ງການເງິນສຳລັບໂຄງການພະລັງງານທົດແທນ ແລະ ບັນດາກິດຈະກຳຕ່າງໆ, ການສົ່ງເສີມກະສິກຳ, ການພັດທະນາການປູກຝຶດສຳລັບການຜະລິດພະລັງງານທົດແທນ ແລະ ໂຄງການຕ່າງໆ ທີ່ຈັດຕັ້ງປະຕິບັດໂດຍວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ;

ເພື່ອຈັດຕັ້ງປະຕິບັດວຽກງານຂ້າງເທິງ, ບາດກ້າວທຳອິດຈະຕ້ອງດຳເນີນການປະເມີນ ແລະ ປັບປຸງຍຸດທະສາດ ພະລັງງານທົດແທນ ໂດຍລວມເອົາການວິໄຈບັນຫາດັ່ງຕໍ່ໄປນີ້:

- ງົບປະມານ, ກຳນົດຊ່ອງຫວ່າງ ແລະ ການລະໂອກາດສຳລັບການຍົກລະດັບ ການຄັດເລືອກ ແລະ ແຫຼ່ງທີ່ມາຂອງເຕັກໂນໂລຊີ ໂດຍສະເພາະຊ່ອງຫວ່າງ ທີ່ມີຄວາມຈຳເປັນໃນການວິໄຈຢູ່ ສປປ ລາວ ລວມມີ:
  - ຊ່ອງຫວ່າງ ດ້ານນະໂຍບາຍ, ນິຕິກຳ, ລະບຽບຫຼັກການ ແລະ ອົງກອນ;
  - ຊ່ອງຫວ່າງ ດ້ານເສດຖະກິດ, ການເງິນ ແລະ ການຕະຫຼາດ;
  - ຊ່ອງຫວ່າງດ້ານເຕັກໂນໂລຊີ, ຄວາມອາດສາມາດຂອງບຸກຄະລາກອນ ແລະ ພື້ນຖານໂຄງລ່າງ;

ຍຸດທະສາດພັດທະນາພະລັງງານທົດແທນ	
	• ລະດັບຄວາມພ້ອມ ແລະ ການຄຸ້ມຄອງ ໃນປັດຈຸບັນ; • ເປົ້າໝາຍໃນປັດຈຸບັນສຳລັບການສະໜອງ ແລະ ເຮັດແນວໃດໃຫ້ສອດຄ່ອງກັບການຄາດຄະເນຄວາມຕ້ອງການ ໃນຕໍ່ໜ້າ; • ສະໜັບສະໜູນທາງດ້ານນະໂຍບາຍ ເຊັ່ນ: ການຈູງໃຈ ດ້ານອາກອນ ແລະ ພາສີການນຳເຂົ້າ; • ຄວາມພ້ອມດ້ານການຕະຫຼາດ ເພື່ອດຶງດູດການລົງທຶນຈາກພາກສ່ວນເອກະຊົນ; ຈາກຜົນໄດ້ຮັບຂ້າງເທິງ, ຈຸດປະສານງານດ້ານພະລັງງານທົດແທນ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງຂອງ ສປປ ລາວ ມີຄວາມສາມາດໃນການປະຕິບັດຕາມສັນຍາສາກົນກ່ຽວກັບ ການສະໜອງພະລັງງານ ແລະ ການຄ້າ. ລະບົບລະບຽບຫຼັກການເຫຼົ່ານັ້ນ ຈະໄດ້ມີຄວາມເຂັ້ມແຂງຂຶ້ນຕື່ມ, ຊຶ່ງຈະເຮັດໃຫ້ບັນດາອົງການຈັດຕັ້ງຂອງ ສປປ ລາວ ມີຄວາມພ້ອມ ແລະ ມີອຳນາດໃນການຕໍ່ລອງກັບຄູ່ເຈລະຈາ.
ອຸປະສັກຕົ້ນຕໍໃນການຈັດຕັ້ງປະຕິບັດ	• ຂາດຂໍ້ມູນ ກ່ຽວກັບ ພະລັງງານທົດແທນ ທີ່ເຊື່ອຖືໄດ້ ລວມທັງ ຂະແໜງການຍ່ອຍຕົວຢ່າງ ຄວາມເປັນຈິງຂອງ ທ່າແຮງ ແລະ ຄວາມເປັນໄປໄດ້ ຂອງແຕ່ລະແຫຼ່ງພະລັງງານ ແລະ ຄວາມເໝາະສົມຂອງທີ່ຕັ້ງ; • ຄວາມຮູ້ ແລະ ຄວາມສາມາດ ກ່ຽວກັບ ເຕັກໂນໂລຊີພະລັງງານທົດແທນ ແມ່ນຍັງມີຂີດຈຳກັດ; • ການສົ່ງເສີມ ແລະ ລົງທຶນ ຍັງຈຳກັດ; • ຍັງຂາດນະໂຍບາຍກ່ຽວກັບການສົ່ງເສີມ ການພັດທະນາ ເຕັກໂນໂລຊີ ພະລັງງານທົດແທນ, ກົນໄກການນຳເຂົ້າ-ສົ່ງອອກ ແລະ ການ ກູ້ຢືມທີ່ມີດອກເບ້ຍຕ່ຳ.
ຄວາມຈຳເປັນໃນການສະໜັບສະໜູນ	• ສ້າງຄວາມອາດສາມາດ ສຳລັບການຄົ້ນຄວ້າ ກ່ຽວກັບ ຄວາມເປັນຈິງຂອງ ທ່າແຮງ ແລະ ຄວາມເປັນໄປໄດ້ຂອງແຕ່ລະແຫຼ່ງພະລັງງານ ແລະ ຄວາມເໝາະສົມຂອງທີ່ຕັ້ງ; • ສ້າງຄວາມເຂັ້ມແຂງທາງດ້ານກົນໄກການເງິນ, ນະໂຍບາຍກ່ຽວກັບການສົ່ງເສີມ ແລະ ການພັດທະນາ ພະລັງງານທົດແທນ, ເຕັກໂນໂລຊີ ລວມທັງ ຕ່ອງໂສ້ ການຕອບສະໜອງ.
ງົບປະມານສຳລັບວຽກງານຫຼຸດຜ່ອນອາຍພິດເຮືອນແກ້ວ	ງົບປະມານຈຳນວນ 658.75 ລ້ານ ໂດລາ ສະຫະລັດ (2007-2030) ໃນນີ້ລວມມີ ມູນຄ່າ ການລົງທຶນ, ການບໍລິຫານຄຸ້ມຄອງ ແລະ ການໃຊ້ຈ່າຍ.

ການພັດທະນາພະລັງງານທົດແທນຂະໜາດໃຫ່ຍ	
ລາຍລະອຽດ	ສປປ ລາວ ຍັງ ທີ່ທ່າແຮງສູງໃນການຜະລິດ ໄຟຟ້າພະລັງງານນ້ຳ ຊຶ່ງສາມາດ ສົ່ງອອກ ພະລັງງານທີ່ສະອາດ ເພື່ອການເຕີບໂຕສີຂຽວໃຫ້ບັນດາປະເທດໃກ້ຄຽງ ແລະ ຈະສ້າງ

ການພັດທະນາພະລັງງານທົດແທນຂະໜາດໃຫ່ຍ	
	ລາຍຮັບ-ເງິນຕາຕ່າງປະເທດ ແລະ ວຽກເຮັດງານທຳ ໃນ ສປປ ລາວ.
ຈຸດປະສົງ	ເພື່ອພັດທະນາພະລັງງານນ້ຳ ທີ່ມີຂະໜາດໃຫ່ຍ ເພື່ອສະໜອງໃຫ້ບັນດາປະເທດໃກ້ຄຽງ. ແຕ່ນີ້ຮອດ 2020 ການຜະລິດໄຟຟ້າຈະເພີ່ມຂຶ້ນ 2,3 GW ຊຶ່ງເຮັດໃຫ້ ກຳລັງການຜະລິດໄຟຟ້າທັງໝົດເພີ່ມຂຶ້ນ ປະມານ 5,5 GW. ນອກຈາກນັ້ນ, ຫຼັງຈາກປີ 2020 ສປປ ລາວ ມີຄວາມສາມາດຜະລິດໄຟຟ້າພະລັງງານນ້ຳ ຫຼາຍກວ່າ 20 GW.
ປີພື້ນຖານໃນການຄິດໄລ່	ກຳນົດເອົາປີ 2015
ວິທີການປະເມີນ ແລະ ຄາດຄະເນການປ່ອຍອາຍພິດເຮືອນແກ້ວໃນອະນາຄົດ	ການປະເມີນ ແມ່ນອີງໃສ່ສົມມຸດຖານດັ່ງລຸ່ມນີ້: ຄາດຄະເນວ່າ 85% ຂອງການຜະລິດກະແສໄຟຟ້າ ແມ່ນຖືກ ສົ່ງອອກ ປະເທດໄທ ແລະ ສສ ຫວຽດນາມ. ໂດຍປະເມີນເອົາ 1MW ຜະລິດໄດ້ 3,5 Gwh ແລະ 1 Gwh ຜະລິດພະລັງງານ 3,6TJ ແລະ ຕົວຄູນການກະຈາຍແມ່ນ 0.673662 Gg/TJ.
ຄາດຄະເນປະລິມານການຫຼຸດຜ່ອນອາຍພິດເຮືອນແກ້ວ	16.284.074,5 ໂຕນການກອນໄດອົກໄຊ
ແຜນການເພື່ອບັນລຸເປົ້າໝາຍ	ຈັດຕັ້ງປະຕິບັດສັນຍາການສົ່ງອອກໄຟຟ້າ ທີ່ສອດຄ່ອງກັບການພັດທະນາກົນໄກການຕະຫຼາດການກອນ ຕາມກົນໄກການຫຼຸດຜ່ອນອາຍພິດເຮືອນແກ້ວ ຕາມສະພາບເງື່ອນໄຂຂອງປະເທດ (NAMA) ໃນອານາຄົດ.
ອຸປະສັກຕົ້ນຕໍໃນການຈັດຕັ້ງປະຕິບັດ	ງົບປະມານ ແລະ ການເຂົ້າເຖິງ ແຫຼ່ງທຶນ ຍັງຈຳກັດ
ຄວາມຈຳເປັນໃນການສະໜັບສະໜູນ	ສ້າງຄວາມສາມາດ ແລະ ການສະໜັບສະໜູນດ້ານການເງິນ ເພື່ອສ້າງຄວາມເຂັ້ມແຂງໃຫ້ລະບົບການປ້ອງກັນສິ່ງແວດລ້ອມ, ການຈັດສັນຍົກຍ້າຍ, ຄວາມປອດໄພຂອງເຂື່ອນ, ຄວາມທົນທານ ຕໍ່ການປ່ຽນແປງດິນຟ້າອາກາດ ແລະ ການພັດທະນາກົນໄກດ້ານການເງິນ ເພື່ອຫຼາຍຈຸດປະສົງ.
ງົບປະມານສຳລັບວຽກງານຫຼຸດຜ່ອນອາຍພິດເຮືອນແກ້ວ	ປະມານ 320 ລ້ານ ໂດລາສະຫະລັດ

ຄາດໝາຍສູ້ຊົນການຊົມໃຊ້ໄຟຟ້າໃນຊົນນະບົດ	
ລາຍລະອຽດ	ຮັບປະກັນຄວາມຕ້ອງການໃນການເຂົ້າເຖິງແຫຼ່ງພະລັງງານ ແລະ ພະລັງງານທີ່ສະອາດ ຂອງປະຊາຊົນໃນເຂດຊົນນະບົດ ໂດຍສະເພາະແລ້ວໃນເວລາ ທີ່ຍັງບໍ່ສາມາດເຂົ້າເຖິງຕາໜ່າງໄຟຟ້າ. ໂດຍການເພີ່ມການຊົມໃຊ້ໄຟຟ້າໃນເຂດຊົນນະບົດ ຈະຊ່ວຍຫຼຸດຜ່ອນການນຳໃຊ້ຝືນ ແລະ ນ້ຳມັນເຊື້ອໄຟ.
ຈຸດປະສົງ	ສປປ ລາວ ໄດ້ວ່າງຄາດໝາຍ ສະໜອງໄຟຟ້າໃຫ້ຄົວເຮືອນ ໃຫ້ໄດ້ 90%, ຂອງຄົວເຮືອນ ໃນຊົນນະບົດ ທັງໝົດທົ່ວປະເທດ ໃນປີ 2020.

ຄາດໝາຍສູ້ຊົນການຊົມໃຊ້ໄຟຟ້າໃນຊົນນະບົດ	
	ການສະໜອງໄຟຟ້າໄດ້ເພີ່ມຂຶ້ນ ຈາກ 15% ໃນປີ 1995 ມາເປັນ 73% ໃນປີ 2010.
ປີພື້ນຖານໃນການຄິດໄລ່	ໄດ້ກຳນົດເອົາປີ 2010
ວິທີການປະເມີນຜົນແລະຄາດຄະເນການປ່ອຍອາຍພິດເຮືອນແກ້ວໃນອະນາຄົດ	ກົນໄກການຫຼຸດຜ່ອນອາຍພິດເຮືອນແກ້ວ ຕາມສະພາບເງື່ອນໄຂ ຂອງປະເທດ (NAMA) ເພື່ອສະໜອງໄຟຟ້າໃນຊົນນະບົດ ໂດຍການຮ່ວມມືກັບອົງການສະຫະປະຊາຊາດເພື່ອການພັດທະນາ ແມ່ນໄດ້ວາງ ແຜນການຈັດຕັ້ງປະຕິບັດ ຊຶ່ງຈະເປັນການປະກອບສ່ວນເພື່ອບັນລຸຄາດໝາຍສູ້ຊົນ 90% ຂອງການນຳໃຊ້ໄຟຟ້າໃນເຂດຊົນນະບົດ ໃນປີ 2020. ການປະເມີນການຫຼຸດຜ່ອນອາຍພິດເຮືອນແກ້ວແມ່ນອີງໃສ່ສົມມຸດຖານ ລຸ່ມນີ້: ໃນປີ 2020 ຈຳນວນ 1.108.609 ຫຼື 90 % ຂອງຄົວເຮືອນໃນຊົນນະບົດ ຈະມີໄຟຟ້າຊົມໃຊ້. ໃນນີ້ຈຳນວນ 60 % ຂອງຄົວເຮືອນໃນເຂດຊົນນະບົດ ແມ່ນນຳໃຊ້ ນ້ຳມັນເພື່ອຜະລິດກະແສໄຟຟ້າ ສະເລ່ຍ 30 ລິດ ຕໍ່ຄົວເຮືອນ ຕໍ່ ປີ. ສະນັ້ນ ເພື່ອບັນລຸເປົ້າໝາຍ ການພັດທະນາໄຟຟ້າຊົນນະບົດ ທີ່ໄດ້ກຳນົດໄວ້ນັ້ນ ແມ່ນຈະຊ່ວຍຫຼຸດຜ່ອນການນຳໃຊ້ນ້ຳມັນເພື່ອຜະລິດກະແສໄຟຟ້າ ປະມານ 19.95 ລ້ານລິດ. ໂດຍອີງໃສ່ຂໍ້ມູນດັ່ງກ່າວ ແລະ ການນຳໃຊ້ຕົວຄູນການກະຈາຍຂອງການຜະລິດກະແສໄຟຟ້າ ຢູ່ ສປປ ລາວ ຊຶ່ງຈະຊ່ວຍໃຫ້ສາມາດຫຼຸດຜ່ອນການປ່ອຍກາກບອນໄດອົກໄຊ ໄດ້ປະມານ 63,180 ໂຕນກາກບອນໄດອົກໄຊ ຕໍ່ ປີ. ສປປ ລາວ ຍັງມີຄວາມຈຳເປັນໃນການສ້າງຄວາມສາມາດ ເພື່ອຄາດຄະເນສະພາບການນຳໃຊ້ພະລັງງານ ແລະ ການຫຼຸດຜ່ອນການປ່ອຍ (BAU) ຊຶ່ງມັນສາມາດເປັນໄປໄດ້ ໃນການຈັດຕັ້ງປະຕິບັດ ວຽກງານນີ້.
ຄາດຄະເນການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ	63.180 ໂຕນ ກາກບອນໄດອົກໄຊ (tC02) ຕໍ່ ປີ ຫຼື 630.180 ໂຕນ ກາກບອນໄດອົກໄຊ (tC02) ສຳລັບ ປີ 2010 ຫາ 2020.
ແຜນການເພື່ອບັນລຸເປົ້າໝາຍ	ຈັດຕັ້ງປະຕິບັດ ກົນໄກການຫຼຸດຜ່ອນອາຍພິດເຮືອນແກ້ວ ຕາມສະພາບເງື່ອນໄຂ ຂອງປະເທດ (NAMA) ເພື່ອສະໜອງໄຟຟ້າໃນຊົນນະບົດ ໂດຍການຮ່ວມມືກັບອົງການສະຫະປະຊາຊາດເພື່ອການພັດທະນາ ແລະ ຈັດຕັ້ງປະຕິບັດ ມາດຕະການຕ່າງໆ ກ່ຽວກັບ ການຊົມໃຊ້ໄຟຟ້າໃນຊົນນະບົດ ໂດຍສະເພາະແມ່ນ 5 ມາດຕະການສຳຄັນ ດັ່ງລຸ່ມນີ້: • ບຳລຸງຮັກສາ ແລະ ຂະຫຍາຍການສະໜອງໄຟຟ້າອີງຕາມປະສິດທິພາບດ້ານເສດຖະກິດ, ຄວາມໜ້າເຊື່ອຖື ແລະ ຄວາມຍືນຍົງ ເພື່ອສົ່ງເສີມການພັດທະນາເສດຖະກິດ ແລະ ສັງຄົມ; • ລັດຖະບານ ສົ່ງເສີມການພັດທະນາ ແລະ ເພີ່ມການສົ່ງອອກ ກະແສໄຟຟ້າ ເພື່ອຮັບປະກັນ ບັນລຸເປົ້າໝາຍດ້ານການເງິນ; • ພັດທະນາ ແລະ ສ້າງຄວາມເຂັ້ມແຂງທາງດ້ານກົດໝາຍ ແລະ ລະບຽບການ

ຄາດໝາຍສູ້ຊົນການຊຸມໃຊ້ໄຟຟ້າໃນຊົນນະບົດ	
	ເພື່ອພັດທະນາຂະແໜງ ການໄຟຟ້າຢ່າງມີປະສິດທິພາບ ໂດຍຜ່ານລັດຖະບານ, ເອກະຊົນ ຫຼື ເປັນຄູ່ຮ່ວມງານລະຫວ່າງພາກລັດ ແລະ ເອກະຊົນ; • ຍົກລະດັບຄວາມສາມາດໃນລະດັບຊາດ ໄປພ້ອມໆກັບການພັດທະນາມາດຕະຖານ ເຕັກນິກສາກົນ, ຄວາມຊ່ຽວຊານ ແລະ ປະສົບການ; • ບັນລຸການພັດທະນາແບບຍືນຍົງ ໂດຍການກຳນົດຄວາມຮັບຜິດຊອບ ແລະ ຜົນກະທົບ ທີ່ກ່ຽວຂ້ອງກັບສັງຄົມ ແລະ ສິ່ງແວດລ້ອມ.
ອຸປະສັກຕົ້ນຕໍໃນການຈັດຕັ້ງປະຕິບັດ	• ຍັງມີຂໍ້ຈຳກັດ ໃນການເຂົ້າເຖິງ, ການຍົກຍ້າຍຈັນສັນ ແລະ ການຕັ້ງຖິ່ນຖານໃໝ່ ເຂົ້າໃນແຜນພັດທະນາພື້ນຖານໂຄງລ່າງ ຊົນນະບົດ; • ຕາໜ່າງສາຍສົ່ງໄຟຟ້າ ໃນປະຈຸບັນ ແມ່ນຍັງຈຳກັດ; • ຍັງມີງົບປະມານຈຳກັດ ສຳລັບການພັດທະນາລະບົບໄຟຟ້າຊົນນະບົດ; • ຍັງບໍ່ທັນມີນະໂຍບາຍ ທີ່ເປັນລະບົບຄົບຊຸດ ທີ່ເອື້ອອຳນວຍໃຫ້ແກ່ການເຂົ້າເຖິງການເງິນ ແລະ ການລົງທຶນຂອງພາກເອກະຊົນ.
ຄວາມຈຳເປັນໃນການສະໜັບສະໜູນ	• ສ້າງຄວາມສາມາດ ແລະ ກົນໄກການເງິນ ສຳລັບການເຂົ້າເຖິງ ງົບປະມານ ແລະ ການລະດົມທຶນ; • ທຶນສະໜັບສະໜູນ ແລະ ການລົງທຶນ ສຳລັບ ການຂະຫຍາຍຕາໜ່າງໄຟຟ້າ, ລະບົບ ແລະ ສິ່ງອຳນວຍຄວາມສະດວກ.
ງົບປະມານສຳລັບວຽກງານຫຼຸດຜ່ອນອາຍພິດເຮືອນແກ້ວ	ປະມານ 160 ລ້ານ ໂດລາສະຫະລັດ (ສະເພາະແຕ່ລະບົບສາຍສົ່ງໄຟຟ້າເທົ່ານັ້ນ).

ການຈັດຕັ້ງປະຕິບັດ ໜ້າວຽກທີ່ໄດ້ກຳນົດພາຍໃຕ້ກົນໄກຫຼຸດຜ່ອນອາຍພິດເຮືອນແກ້ວ ຕາມສະພາບເງື່ອນໄຂຂອງປະເທດ (NAMAs) ຢູ່ຂະແໜງຂົນສົ່ງ	
ລາຍລະອຽດ	ພັດທະນາລະບົບເສັ້ນທາງ ແລະ ລົດໂດຍສານສາທາລະນະ ຢ່າງເປັນລະບົບ ເພື່ອຕອບສະໜອງກັບການເພີ່ມຂຶ້ນຂອງຄວາມຕ້ອງການໃນການເດີນທາງ ຊຶ່ງຊ່ວຍຫຼຸດຜ່ອນອາຍພິດເຮືອນແກ້ວ ແລະ ທັງເປັນການສົ່ງເສີມການພັດທະນເສດຖະກິດ.
ຈຸດປະສົງ	ເພື່ອພັດທະນາຕາໜ່າງເສັ້ນທາງໃຫ້ດີຂຶ້ນກ່ວາເກົ່າ ຊຶ່ງຈະຊ່ວຍຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ຖ້າທຽບໃສ່ໃນສະພາບໃນປະຈຸບັນ (BAU) ຈາກໄລຍະແລະ ກິໂລແມັດ ຂອງການເດີນທາງທີ່ຫຼຸດລົງ ພ້ອມດຽວກັນນີ້ຈະຊ່ວຍຫຼຸດຜ່ອນມົນລະພາວະເປັນຕົ້ນທາດ NO_X ແລະ SO_x ເຊິ່ງຈະມີຜົນປະໂຫຍດຕໍ່ດ້ານອື່ນໆ ເຊັ່ນ: ປັບປຸງຄຸນນະພາບອາກາດ ແລະ ທັງເປັນຜົນດີ ຕໍ່ສຸກຂະພາບຂອງຄົນ.
ປີພື້ນຖານໃນການຄິດໄລ່	ກຳນົດເອົາປີ 2007

ການຈັດຕັ້ງປະຕິບັດ ໜ້າວຽກທີ່ໄດ້ກຳນົດພາຍໃຕ້ກົນໄກຫຼຸດຜ່ອນອາຍພິດເຮືອນແກ້ວ ຕາມສະພາບເງື່ອນໄຂຂອງປະເທດ (NAMAs) ຢຸ່ຂະແໜງຂົນສົ່ງ	
ວິທີການປະເມີນຜົນອີງຕາມປີ ແລະ ການຄາດຄະເນການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ໃນອະນາ ຄົດ	ຈະໄດ້ກຳນົດເອົາຂໍ້ມູນປີພື້ນຖານເປັນປີ 2007 ເປັນບ່ອນອີງໃນການຄາດຄະເນສະພາບທີ່ດຳເນີນປົກກະຕິ (BAU) ຊຶ່ງອີ່ງໃສ່ແນວໂນ້ມດ້ານບໍລິມາດຂອງການສັນຈອນ ໃນລະຫວ່າງ ປີ 2007 ແລະ ກ່ອນສ້າງແຜນງານແຫ່ງຊາດ INDC.ການຄາດຄະເນແມ່ນກຳນົດ ແລະ ອີງໃສ່ການດຳເນີນການສຳຫຼວດ ຄາດຄະເນ ຄວາມຕ້ອງການ ຂອງການຂົນສົ່ງ ກ່ອນການເລີ້ມກະກຽມສ້າງແຜນງານແຫ່ງຊາດ ສະບັບນີ້. ການຄາດຄະເນ ແລະ ຄົດໄລ່ການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ໃນເອກະສານກົນໄກຫຼຸດຜ່ອນອາຍພິດເຮືອນແກ້ວ ຕາມສະພາບເງື່ອນໄຂ ຂອງປະເທດ (NAMA) ຮ່ວມມືກັບອົງການສະຫະປະຊາຊາດເພື່ອການພັດທະນາ ໂດຍນຳໃຊ້ວິທີການ "ກິດຈະກຳ-ໂຄງສ້າງ-ຄວາມໜາແໜ້ນ-ນ້ຳມັນເຊື້ອໄຟ" (ASIF) ເພື່ອຄົດໄລ່ການຫຼຸດຜ່ອນອາຍພິດເຮືອນແກ້ວ
ຄາດຄະເນການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ	ການສຶກສາຄວາມເປັນໄປໄດ້ ຍ້ອນມີການພັດທະນາຕາໜ່າງເສັ້ນທາງ ຄາດຄະເນວ່າ ຈະສາມາດຫຼຸດຜ່ອນອາຍພິດເຮືອນແກ້ວໄດ້ປະມານ 32.000 ໂຕນການບອນໄດອົກໄຊ ຕໍ່ຄົນ ຕໍ່ປີ (tCO_2/ຄົນ/ປີ) ແລະ ການສຶກສາຄວາມເປັນໄປໄດ້ ຍ້ອນມີການພັດທະນາຂົນສົ່ງມວນຊົນ ຄາດຄະເນວ່າ ຈະສາມາດຫຼຸດຜ່ອນອາຍພິດເຮືອນແກ້ວໄດ້ປະມານ 158.000 ໂຕນການບອນ ໄດອົກໄຊ ຕໍ່ຄົນ ຕໍ່ປີ (tCO_2/ຄົນ/ປີ) ຊຶ່ງທັງສອງກໍລະນີດັ່ງກ່າວ ແມ່ນສົມທຽບໃສ່ສະພາບການດຳເນີນໃນປະຈຸບັນ (BAU) ໂດຍກຳນົດເອົາປີ 2007 ເປັນປີພື້ນຖານ ສົມທຽບໃສ່ກັບປີ 2025
ແຜນການເພື່ອບັນລຸເປົ້າໝາຍ	ການປະຕິບັດຈະສຳເລັດເປັນດັ່ງສ່ວນໜຶ່ງ ຂອງໃນເອກະສານກົນໄກຫຼຸດຜ່ອນ ອາຍພິດເຮືອນແກ້ວຕາມສະພາບເງື່ອນໄຂ ຂອງປະເທດ (NAMA) ຮ່ວມມືກັບອົງການສະຫະປະຊາຊາດເພື່ອການພັດທະນາ. ບັນດາໂຄງການໃນການພັດທະນາຕາໜ່າງເສັ້ນທາງ, ການພັດທະນາການຂົນສົ່ງມວນຊົນ ແລະ ການຄຸ້ມຄອງການຂົນສົ່ງ ຊຶ່ງມີແຜນການຈັດຕັ້ງປະຕິບັດ ເປັນ 3 ໄລຍະ ຄື: ໄລຍະສັ້ນ, ກາງ ແລະ ໄລຍະຍາວ.
ອຸປະສັກຕົ້ນຕໍໃນການຈັດຕັ້ງປະຕິບັດ	• ຍັງບໍ່ມີຄວາມແນ່ນອນ ແລະ ຈະແຈ້ງ ກ່ຽວກັບຕະຫຼາດການບອນ ແລະ ແຮງຈູໃຈ ຕໍ່ການຫຼຸດຜ່ອນອາຍພິດເຮືນອແກ້ວ; • ຍັງມີງົບປະມານຈຳກັດ ສຳລັບການພັດທະນາລະບົບ ຕາໜ່າງເສັ້ນທາງ ແລະ ລະບົບຂົນສົ່ງ; • ສະພາບປະຈຸບັນ ຂອງຕາໜ່າງເສັ້ນທາງແມ່ນຍັງມີຄວາມສະລັບຊັບຊ້ອນ ແລະ ຍັງບໍ່ທັນໄດ້ມີການເຊື່ອມຈອດກັນ ໃນການວາງຝັງຕົວເມືອງແບບຍືນຍົງ. ການປັບປຸງ ບັນຫາແມ່ນອາດຈະໃຊ້ເວລາ ແລະ ມີມູນຄ່າ ສົມຄວນ.

ການຈັດຕັ້ງປະຕິບັດ ໜ້າວຽກທີ່ໄດ້ກຳນົດພາຍໃຕ້ກົນໄກຫຼຸດຜ່ອນອາຍພິດເຮືອນແກ້ວ ຕາມສະພາບເງື່ອນໄຂຂອງປະເທດ (NAMAs) ຢູ່ຂະແໜງຂົນສົ່ງ	
ຄວາມຈຳເປັນໃນການສະໜັບສະໜຸນ	• ການສ້າງຄວາມສາມາດ ກ່ຽວກັບ: - ການວາງຝັງເມືອງ ແບບຍືນຍົງ ແລະ ເຊື່ອມຈອດກັນ; - ການບັງຄັບໃຊ້ກົດໝາຍ; - ໂມແດວ ການເງິນ ສຳລັບການວາງແຜນເສັ້ນທາງ; - ລະບົບຄວບຄຸມ ການຈັນຈອນ - ເຕັກໂນໂລຊີ ຂອງການຂົນສົ່ງ ທີ່ຍືນຍົງ ແລະ ມີຄວາມທົນທານ ຕໍ່ການປ່ຽນແປງດິນຟ້າອາກາດ. • ການເຂົ້າເຖິງເງື່ອນໄຂ ທີ່ເປັນການດຶງດູດ ສຳລັບ ທຶນໂຄງການພື້ນຖານ.
ງົບປະມານສຳລັບວຽກງານຫຼຸດຜ່ອນອາຍພິດເຮືອນແກ້ວ	ປະມານ 105 ລ້ານ ໂດລາສະຫະລັດ (ຮອດປີ 2020)

ເອກະສານຊ້ອນທ້າຍທີ 2: ຕາຕະລາງສັງລວມມາດຕະການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ

ຂະແໜງກະສິກຳ	
ຈຸດປະສົງ ທີ 1 ແລະ ວຽກງານອື່ນໆ ທີ່ ກ່ຽວຂ້ອງ	**ສິ່ງເສີມລະບົບກະສິກຳ ທີ່ມີຄວາມທົນທານ ຕໍ່ກັບການປ່ຽນແປງດິນຟ້າອາກາດ** • ປັບປຸງລະບົບ ເຕັກນິກການຜະລິດກະສິກຳ ທີ່ເໝາະສົມກັບຜົນກະທົບ ຈາກການປ່ຽນດິນຟ້າອາກາດ; • ປັບປຸງ ແລະ ພັດທະນາພັນພືດ ແລະ ພັນສັດ ໃຫ້ເໝາະສົມກັບພື້ນທີ່ມີຄວາມສ່ຽງຕໍ່ກັບໄພພິບັດ ໂດຍສະເພາະໃນເຂດໄພນ້ຳຖ້ວມ ແລະ ແຫ້ງແລ້ງ
ຈຸດປະສົງ ທີ 2 ແລະ ວຽກງານອື່ນໆ ທີ່ກ່ຽວຂ້ອງ	**ສິ່ງເສີມເຕັກໂນໂລຊີທີ່ເໝາະສົມ ສຳລັບ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ** • ຖ່າຍທອດ, ພັດທະນາ ແລະ ສົ່ງເສີມເຕັກໂນໂລຊີທີ່ເໝາະສົມ ສຳລັບການຮັບມືຕໍ່ກັບການປ່ຽນແປງດິນຟ້າອາກາດ (ນຳໃຊ້ຝຸ່ນອິງຄະທາດ ສຳລັບການປັບປຸງດິນ, ການປ້ອງກັນພືດແບບປະສົມປະສານ ແລະ ນຳໃຊ້ສະໝຸນໄພເຂົ້າໃນການຈຳກັດສັດຕູພືດ ແລະ ປິ່ນປົວພະຍາດສັດ, ການເກັບຮັກສາອາຫານໄວ້ດິນ, ການປູກພືດຊະນິດພັນ ທີ່ມີຄວາມທົນທານຕໍ່ກັບການປ່ຽນແປງດິນຟ້າອາກາດ, ພູມປັນຍາ ຂອງຊາວບ້ານ ກ່ຽວກັບ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ອື່ນໆ); • ຍົກລະດັບວຽກງານ ການຄົ້ນຄ້ວາ ແລະການບໍລິການ ດ້ານການສົ່ງເສີມກະສິກຳ

ຂະແໜງກະສິກຳ	
	ເພື່ອຫຼຸດຜ່ອນຜົນກະທົບດ້ານລົບທີ່ອາດເກີດຂຶ້ນຈາກການປ່ຽນແປງດິນຟ້າອາກາດ; • ສົ່ງເສີມການເຮັດນາຕ່າວ ແລະ ປູກພືດອາຍຸສັ້ນໃຫ້ຊາວກະສິກອນ ທີ່ໄດ້ຮັບຜົນກະທົບຈາກໄພພິບັດ; • ສົ່ງເສີມເຕັກນິກວິຊາການ ເຂົ້າໃນການປູກຝັງ-ລ້ຽງສັດ ແລະ ອຸຕຸກະເສດ ໃນເຂດທີ່ມີຄວາມສ່ຽງຕໍ່ກັບໄພພິບັດ.
ອຸປະສັກຕົ້ນຕໍໃນການຈັດຕັ້ງປະຕິບັດ	• ຍັງມີຂີດຈຳກັດ ການຄົ້ນຄວ້າ, ດ້ານຄວາມຮູ້, ຄວາມສາມາດ ແລະ ເຕັກໂນໂລຊີ ກ່ຽວກັບ ລະບົບການກະສິກຳແບບອະນຸລັກທີ່ເໝາະສົມ, ປະສົມປະສານ ແລະ ຍືນຍົງ, ການກະສິກຳແບບປະສົມປະສານກັບການປູກໄມ້, ການເຊື່ອມໂຊມ ແລະ ຟື້ນຟູດິນ, ການຄຸ້ມຄອງການລະບາດ ຂອງພະຍາດສັດ ແລະ ແມງໄມ້, ການຂະຫຍາຍພັນພືດ ແລະ ສັດ; • ຍັງມີຂີດຈຳກັດດ້ານ ຂໍ້ມູນ, ຄວາມຮູ້ ແລະ ຄວາມສາມາດ ໃນການປະເມີນຄວາມບອກບາງ ຂອງ ລະບົບການກະສິກຳແບບອະນຸລັກ, ປະສົມປະສານ ແລະ ຍືນຍົງ ຕໍ່ກັບ ການຫຼຸດຜ່ອນອາຍພິດເຮືອນແກ້ວ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ; • ການບັງຄັບໃຊ້ກົດໝາຍ ຍັງບໍ່ມີປະສິດທິຜົນ ໂດຍສະເພາະ ການສຳປະທານທີ່ດິນ, ການຫັນປ່ຽນທີ່ດິນ, ການນຳໃຊ້ສານເຄມີ ແລະ ເຕັກນິກ ກະສິກຳທີ່ບໍ່ເປັນມິດຕໍ່ສິ່ງແວດລ້ອມ; • ນະໂຍບາຍການພັດທະນາທີ່ດິນ ຍັງບໍ່ທັນມີຄົບຊຸດ ແລະ ບໍ່ມີປະສິດທິຜົນເທົ່າທີ່ຄວນ; • ຍັງມີງົບປະມານຈຳກັດ ໃນການສົ່ງເສີມ ແລະ ລົງທຶນດ້ານກະສິກຳ ທີ່ມີຄວາມທົນທານ ຕໍ່ກັບການປ່ຽນແປງດິນຟ້າອາກາດ;
ຄວາມຈຳເປັນໃນການສະໜັບສະໜູນ	• ສ້າງຄວາມອາດສາມາດ ລວມທັງ ການຄົ້ນຄວ້າ ກ່ຽວກັບ ລະບົບການກະສິກຳແບບອະນຸລັກທີ່ເໝາະສົມ, ປະສົມປະສານ ແລະ ຍືນຍົງ, ການກະສິກຳແບບປະສົມປະສານກັບການປູກໄມ້, ການເຊື່ອມໂຊມ ແລະ ຟື້ນຟູດິນ, ການຄຸ້ມຄອງການລະບາດ ຂອງພະຍາດສັດ ແລະ ແມງໄມ້, ການຂະຫຍາຍພັນພືດ ແລະ ສັດ; • ສົ່ງເສີມພູມປັນຍາຊາວບ້ານ ແລະ ເຮັດທົດລອງ ການກະສິກຳ ແລະນຳໃຊ້ ທີ່ດິນ ທີ່ເປັນມິດຕໍ່ສິ່ງແວດລ້ອມ; • ສະໜັບສະໜູນດ້ານການເງິນ ໃນການທົດລ່ອງ ແລະ ສົ່ງເສີມລະບົບການກະສິກຳ ແບບອະນຸລັກທີ່ເໝາະສົມ, ປະສົມປະສານ ແລະ ຍືນຍົງ, ການກະສິກຳແບບປະສົມປະສານກັບການປູກໄມ້, ການເຊື່ອມໂຊມ ແລະ ຟື້ນຟູດິນ, ການຄຸ້ມຄອງການລະບາດ ຂອງພະຍາດສັດ ແລະ ແມງໄມ້, ການຂະຫຍາຍພັນພືດ ແລະ ສັດ;
ງົບປະມານສຳລັບວຽກງານ ການປັບຕົວ	ປະມານ 709 ລ້ານ ໂດລາສະຫະລັດ (2007-2030)

ປ່າໄມ້ ແລະ ການປ່ຽນແປງການນຳໃຊ້ທີ່ດິນ	
ຈຸດປະສົງ ທີ 1 ແລະ ວຽກງານອື່ນໆ ທີ່ກ່ຽວຂ້ອງ	**ສົ່ງເສີມ ລະບົບນິເວດວິທະຍາປ່າໄມ້ ແລະ ການປູກຕົ້ນໄມ້ ທີ່ມີຄວາມທົນທານຕໍ່ກັບການປ່ຽນແປງດິນຟ້າອາກາດ** • ພັດທະນາ ແລະ ຈັດຕັ້ງປະຕິບັດຢ່າງເໝາະສົມ ຕໍ່ກັບລະ ບຽບກົດໝາຍ ລວມທັງ ບົດແນະນຳຕ່າງໆທີ່ກ່ຽວຂ້ອງ ກັບການຄຸ້ມຄອງປ່າໄມ້ແບບຍືນຍົງ; • ສ້າງຄວາມເຂັ້ມແຂງ ໃນວຽກງານການວາງແຜນ ການນຳໃຊ້ທີ່ດິນ, ການຄຸ້ມຄອງ ອ່າງຮັບນ້ຳທີ່ສຳຄັນ ແລະ ການຫຼຸດຜ່ອນການເຮັດໄຮ່ເຂົ້າແບບເລື່ອນລອຍ ເພື່ອ ເພີ່ມຄວາມສາ ມາດຮັບມືກັບການປ່ຽນແປງດິນຟ້າອາກາດ; • ສົ່ງເສີມການດຳເນີນວຽກງານແບບປະສົມປະສານ ໃນການຄຸ້ມຄອງ ອ່າງໂຕ່ງ, ອ່າງເກັບນ້ຳ, ການເກັບກັກນ້ຳ ສຳລັບ ການກະສິກຳແບບປະສົມປະສານກັບການປູກປ່າ,ການຄຸ້ມຄອງສັດປ່າ, ການປະມົງ ແລະ ຄວາມຫຼາກຫຼາຍຂອງຕົ້ນໄມ້ໃນເຂດແຫ້ງແລ້ງ; • ສຳຫຼວດປ່າໄມ້ ແລະ ຈັດສັນ ເພື່ອການຄຸ້ມຄອງແບບຍືນຍົງ ແລະ ການພັດທະນາຊຸມຊົນບົດ; ສ້າງຄວາມເຂັ້ມແຂງ ໃຫ້ແກ່ພະນັກງານສົ່ງເສີມປ່າໄມ້ ແລະ ອາສາສະໝັກປ່າໄມ້ບ້ານ ມີຄວາມສາມາດນຳໃຊ້ເຕັກນິກປູກ, ບົວລະບັດຮັກສາ, ຄຸ້ມຄອງ ແລະນຳໃຊ້ປ່າໄມ້ບ້ານ; • ສົ່ງເສີມການເກັບແກ່ນຕົ້ນໄມ້ໃນປ່າ ແລະ ການຜະລິດແກ່ນຕົ້ນໄມ້ສຳລັບການຟື້ນຟູປ່າ ແລະ ການຮັກສາແນວພັນ; • ຄົ້ນຄວ້າ ແລະ ຄັດເລືອກແນວພັນທີ່ທົນທານຕໍ່ສັດຕູພືດ, ພະຍາດຕິດແປດ, ໄພແຫ້ງແລ້ງ ແລະ ການເຊາະເຈື່ອນຂອງດິນ.
ຈຸດປະສົງ ທີ 2ແລະ ວຽກງານອື່ນໆ ທີ່ກ່ຽວຂ້ອງ	**ສົ່ງເສີມຄວາມສາມາດດ້ານເຕັກນິກວິຊາການ ໃຫ້ແກ່ ຂະແໜງປ່າໄມ້** • ເພີ່ມທະວີ ການສ້າງຈິດສຳນຶກ ແລະ ການສ້າງຄວາມສາມາດດ້ານວິຊາການ ໃຫ້ແກ່ອາສາສະໝັກປ່າໄມ້ບ້ານ ກ່ຽວກັບ ການຄຸ້ມຄອງປ່າໄມ້ທຳມະຊາດ ທີ່ມີຄວາມທົນທານຕໍ່ກັບການປ່ຽນແປງດິນຟ້າອາກາດ, ການກະສິກຳປະສົມປະສານກັບການປູກປ່າ ແລະ ນຳໃຊ້ເຕັກນິກໃນການປູກຕົ້ນໄມ້; • ປະເມີນຂີດຈຳກັດ ແລະ ຄວາມຕ້ອງການ ໃນການຄຸ້ມຄອງຂະແໜງປ່າໄມ້ ທີ່ຕິດພັນກັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.
ອຸປະສັກຕົ້ນຕໍໃນການຈັດຕັ້ງປະຕິ ບັດ	• ຍັງມີຂີດຈຳກັດດ້ານ ຄວາມຮູ້ ແລະ ຄວາມສາມາດ ກ່ຽວກັບ ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ຕໍ່ຂະແໜງປ່າໄມ້, ເຕັກນິກໃນການປັບຕົວ ເປັນຕົ້ນ ວິທີການປັບຕົວໂດຍອີງໃສ່ລະບົບນິເວດ, ສ້າງຄວາມທົນທານແກ່ຊະນິດພັນຕໍ່ການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມ ຄອງປ່າໄມ້ແບບຍືນຍົງ ຕໍ່ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງຄວາມຕ້ອງການໃນການນຳໃຊ້ໄມ້; • ຍັງມີຂີດຈຳກັດດ້ານ ຄວາມສາມາດ ໃນການຄຸ້ມຄອງປ່າຜະລິດ ແລະ ລະບົບນິເວດ

ປ່າໄມ້ ແລະ ການປ່ຽນແປງການນຳໃຊ້ທີ່ດິນ	
	ແບບຍືນຍົງ; • ການບັງຄັບໃຊ້ກົດໝາຍ ແລະ ນະໂຍບາຍ ການຄຸ້ມຄອງປ່າຜະລິດແບບຍືນຍົງ ຍັງບໍ່ມີປະສິດທິຜົນ; • ຂາດງົບປະມານໃນການສະໜັບສະໜູນ ແລະ ການລົງທຶນ.
ຄວາມຈຳເປັນໃນການສະໜັບສະໜູນ	• ສ້າງຄວາມເຂັ້ມແຂງ ດ້ານຄວາມສາມາດ ໃນການວາງແຜນ ແລະ ຕິດຕັ້ງລະບົບການຄຸ້ມຄອງຂໍ້ມູນຂ່າວສານ, ສ້າງແຜນດຳເນີນງານ ກ່ຽວກັບເຕັກນິກ ຂອງແຕ່ລະປະເພດປ່າ; ເຕັກໂນໂລຊີ ໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຕົວຢ່າງ: ວິທີການປັບຕົວໂດຍອີງໃສ່ລະບົບນິເວດ, ສ້າງຄວາມທົນທານ ຂອງລະບົບຊະນິດພັນ ແລະ ປ່າໄມ້; ເຕັກນິກ ໃນການຄຸ້ມຄອງປ່າຜະລິດ ແລະ ການຄຸ້ມຄອງປ່າໂດຍອີງໃສ່ລະບົບນິເວດ ແບບຍືນຍົງ; • ສ້າງຄວາມເຂັ້ມແຂງ ດ້ານຄວາມສາມາດໃນການເຂົ້າເຖິງກອງທຶນສາກົນ ແລະ ການວາງແຜນໃນການລົງທຶນຢ່າງເປັນລະບົບ; • ງົບປະມານ ສະໜັບສະໜູນ ແລະ ການລົງທຶນສຳລັບ ໂຄງການ ກາກບອນ ດ້ານປ່າໄມ້ ລວມທັງ ກົນໄກດ້ານການເງິນ, ການຕະຫຼາດ, ເຕັກໂນໂລຊີ, ການຄິດໄລ່ ແລະ ຕິດຕາມກວດກາ.
ງົບປະມານສຳລັບວຽກງານການປັບຕົວ	ປະມານ 40.5 ລ້ານ ໂດລາສະຫະລັດ

ຊັບພະຍາກອນນ້ຳ	
ຈຸດປະສົງ ທີ 1 ແລະ ວຽກງານ ອື່ນໆ ທີ່ກ່ຽວ ຂ້ອງ	**ສ້າງຄວາມເຂັ້ມແຂງ ລະບົບ ຂໍ້ມູນຂ່າວສານ ກ່ຽວກັບ ຊັບພະຍາກອນນ້ຳ ທີ່ຕິດພັນກັບ ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ** • ສ້າງຄວາມເຂັ້ມແຂງ ໃນວຽກງານເກັບກຳຂໍ້ມູນຂ່າວສານ, ການສ້າງຕົວແບບຈຳລອງ ແລະ ການປະເມີນຄວາມບອບບາງ ໃນການຮັບມືຕໍ່ກັບການປ່ຽນແປງດິນຟ້າອາກາດ ສຳລັບອ່າງຮັບນ້ຳທີ່ສຳຄັນ ໃນ ສປປ ລາວ; • ພັດທະນາ ແລະ ຈັດຕັ້ງປະຕິບັດ ລະບົບອຸຕຸ-ອຸທົກກະສາດ, ລະບົບການເຕືອນໄພນ້ຳຖ້ວມລ່ວງໜ້າ ທີ່ເຊື່ອຖືໄດ້, ການລາຍງານ ແລະ ການບໍລິການເຜີຍແຜ່ ຂໍ້ມູນຂ່າວສານ.
ຈຸດປະສົງ ທີ 2 ແລະ ວຽກງານ ອື່ນໆ ທີ່ກ່ຽວ ຂ້ອງ	**ຄຸ້ມຄອງອ່າງໂຕ່ງນ້ຳ ແລະ ດິນບໍລິເວນນ້ຳ ເພື່ອໃຫ້ມີຄວາມທົນທານຕໍ່ກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ** • ສ້າງຄວາມເຂັ້ມແຂງ ໃນວຽກງານການປົກປັກຮັກສາອ່າງໂຕ່ງນ້ຳ ເພື່ອປົກປ້ອງ ແລະ ຄວບຄຸມປະລິມານຂອງນ້ຳໄຫລ ໃນເຂດນ້ຳເບື້ອງລຸ່ມ; • ສຶກສາ ແລະ ສົ່ງເສີມ ການອະນຸລັກ ແລະ ການພັດທະນາໃນເຂດດິນບໍລິເວນນ້ຳ ໃຫ້ມີຄວາມຍືນຍົງ ແລະໃຫ້ມີຄວາມ ທົນທານຕໍ່ກັບການປ່ຽນແປງດິນຟ້າອາກາດ.
ຈຸດປະສົງ ທີ 3	**ເພີ່ມທະວີ ການກໍ່ສ້າງພື້ນຖານໂຄງລ່າງ ທີ່ຕິດພັນກັບ ຊັບພະຍາກອນນ້ຳ ໃຫ້ມີຄວາມ**

ຊັບພະຍາກອນນ້ຳ	
ແລະ ວຽກງານ ອື່ນໆ ທີ່ກ່ຽວ ຂ້ອງ	**ທົນທານ ຕໍ່ກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ** • ພັດທະນາ ແລະ ສ້າງຄວາມເຂັ້ມແຂງທາງດ້ານມາດຕະຖານ ແລະ ວິທີດຳເນີນງານ ເພື່ອຮັບປະກັນຄວາມປອດໄພຂອງເຂື່ອນ ແລະ ພື້ນຖານໂຄງລ່າງອື່ນທີ່ຕິດພັນກັບ ຊັບພະຍາກອນນ້ຳ; ສ້າງແຜນການລົງທຶນສຳລັບການຍົກລະດັບ ແລະ ການປົກ ປ້ອງພື້ນຖານໂຄງລ່າງທີ່ຕິດພັນກັບຊັບພະຍາກອນນ້ຳ; • ອອກແບບ ແລະ ກໍ່ສ້າງອ່າງເກັບນ້ຳ ທີ່ມີຫຼາຍເປົ້າໝາຍການນຳໃຊ້ ເພື່ອຮັບປະກັນການສະໜອງນ້ຳໃຫ້ພຽງພໍ ໃນລະດູແລ້ງ ແລະ ໃນພື້ນທີ່ທີ່ມີຄວາມ ສ່ຽງຕໍ່ກັບໄພແຫ້ງແລ້ງ; • ກໍ່ສ້າງ ແລະ ຟື້ນຟູ ຝາຍກັ້ນນ້ຳ, ລະບົບ ຊົນລະປະທານ ແລະ ການປ້ອງກັນ ຕະຝັ່ງເຈື່ອນ ແນໃສ່ປັບປຸງໃຫ້ມີຄວາມທົນທານ ຕໍ່ກັບການປ່ຽນແປງດິນຟ້າ ອາກາດ.
ຈຸດປະສົງ ທີ 4 ແລະ ວຽກງານ ອື່ນໆ ທີ່ກ່ຽວ ຂ້ອງ	**ຍົກລະດັບ ຄວາມສາມາດ ໃນວຽກງານ ການປ່ຽນແປງດິນຟ້າອາກາດໃຫ້ແກ່ຂະ ແໜງຊັບພະຍາກອນນ້ຳ** • ເພີ່ມທະວີ ການສ້າງຈິດສຳນຶກ ແລະ ການຍົກລະດັບຄວາມສາມາດດ້ານວິຊາການ ໃຫ້ແກ່ພະນັກງານວິຊາການ ໃນຂະແໜງຊັບພະຍາກອນນ້ຳ ກ່ຽວກັບຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ ຕໍ່ຊັບພະຍາກອນນ້ຳ ແລະ ເຕັກໂນໂລຊີການຄຸ້ມຄອງ ຊັບພະຍາກອນນ້ຳ ແລະ ດິນບໍລິເວນນ້ຳທີ່ເໝາະສົມ; • ຍົກລະດັບຄວາມສາມາດ ໃນການຄຸ້ມຄອງ ຊັບພະຍາກອນນ້ຳ ສຳລັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ; • ສຶກສາການບຳບັດນ້ຳ ທີ່ຈະສ້າງຜົນກະທົບຕໍ່ແຫຼ່ງນ້ຳໜ້າດິນ, ນ້ຳໃຕ້ດິນ ແລະ ລະບົບນິເວດ.
ອຸປະສັກຕົ້ນຕໍໃນການຈັດຕັ້ງປະຕິ ບັດ	• ຍັງມີຂີດຈຳກັດ ດ້ານຄວາມຮູ້ ແລະ ຄວາມສາມາດ ກ່ຽວກັບ ຜົນກະທົບຂອງການ ປ່ຽນແປງດິຟ້າອາກາດ ຕໍ່ຊັບພະຍາກອນນ້ຳ, ລະບົບເຕືອນໄພລ່ວງໜ້າ, ການຄຸ້ມຄອງດິນບໍລິເວນນ້ຳ, ເຕັກໂນໂລຊີທີ່ມີຄວາມທົນທານ ຕໍ່ການປ່ຽນແປງດິນຟ້າອາກາດ ແລະ ການປະເມີນດ້ານການເງິນ; • ລະບົບ ອຸຕຸ-ອຸທົກກະສາດ, ລະບົບເຕືອນໄພລ່ວງໜ້າ ແລະ ແຜນການຄຸ້ມຄອງ ຄວ າມສ່ຽງ ຈາກໄພ ນ້ຳຖ້ວມ ແລະ ໄພແຫ້ງແລ້ງ ແລະ ລະບົບຂໍ້ມູນຂ່າວສານ ແລະ ການເຜີຍແຜ່ ຍັງບໍ່ພຽງພໍ ແລະ ຄົບຊຸດ; • ການຄຸ້ມຄອງອ່າງນ້ຳ ແບບປະສົມປະສານ ຍັງບໍ່ມີປະສິດທິຜົນ ແລະ ຍັງບໍ່ມີແຜນ ການ ເກັບກັກ, ການສະໜອງນ້ຳ ແລະ ການຄຸ້ມຄອງຄຸນະພາບນ້ຳ ທີ່ລະອຽດ; • ຂາດກົນໄກການເງິນ ໃນການເຂົ້າເຖິງແຫຼ່ງທຶນ, ການລະດົມທຶນ ແລະ ການລົງ ທຶນ.
ຄວາມຈຳເປັນໃນການສະໜັບສະໜູນ	ສະໜັບສະໜູນ ດ້ານຄວາມສາມາດ ແລະ ການເງິນ ສຳລັບວຽກງານ: • ລະບົບ ອຸຕຸ-ອຸທົກກະສາດ, ລະບົບເຕືອນໄພລ່ວງໜ້າ ແລະ ແຜນການຄຸ້ມຄອງ ຄວາມສ່ຽງ ຈາກໄພ ນ້ຳຖ້ວມ ແລະ ໄພແຫ້ງແລ້ງ ແລະ

ຊັບພະຍາກອນນ້ຳ	
	ລະບົບການບໍລິການຂໍ້ມູນຂ່າວສານ ແລະ ການເຜີຍແຜ່; • ສ້າງນະໂຍບາຍ ກ່ຽວກັບ ຄວາມປອດໄພຂອງເຂື່ອນ ແລະ ການສະໜອງນ້ຳ ເພື່ອຫຼາຍຈຸດປະສົງ; • ການບັງຄັບໃຊ້ກົດໝາຍ.
ງົບປະມານສຳລັບວຽກງານ ການປັບຕົວ	ປະມານ 44 ລ້ານ ໂດລາສະຫະລັດ

ການຂົນສົ່ງ ແລະ ການພັດທະນາຕົວເມືອງ	
ຈຸດປະສົງ 1 ແລະ ວຽກງານ ອື່ນໆ ທີ່ກ່ຽວ ຂ້ອງ	**ເພີ່ມທະວີຄວາມທົນທານດ້ານການພັດທະນາຕົວເມືອງ ຕໍ່ກັບການປ່ຽນແປງດິນຟ້າອາກາດ ແລະໄພພິບັດທຳມະຊາດ** • ດຳເນີນການກວດສອບຄວາມສ່ຽງ ຈາກການປ່ຽນແປງດິນຟ້າອາກາດ ຕໍ່ກັບ ວຽກງານ ການບໍລິການທາງດ້ານພື້ນຖານໂຄງລ່າງທີ່ສຳຄັນ; • ຮັບປະກັນ ການອອກແບບ ການລະບາຍນ້ຳ ແລະ ການປ້ອງກັນໄພນ້ຳຖ້ວມ ສຳລັບ ພື້ນຖານໂຄງລ່າງຕົວເມືອງ (ເສັ້ນທາງ, ຄອງລະບາຍນ້ຳ, ຄັນຄູປ້ອງກັນໄພ ນ້ຳຖ້ວມ, ລະບົບບຳບັດນ້ຳເປື້ອນ ແລະ ທໍ່ສົ່ງນ້ຳ, ສະໜາມຖີ້ມຂີ້ເຫຍື້ອ, ໂຮງໝໍ, ອາຄານຕ່າງໆ) ໃຫ້ເໝາະສົມກັບເງື່ອນໄຂການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ; • ຮັບປະກັນໃຫ້ລະບົບນ້ຳປະປາ ໃນຕົວເມືອງ ໄດ້ມາດຕະຖານ ການອອກແບບ ແລະ ສາມາດດຳເນີນງານໄດ້ຢ່າງແທດເໝາະຕໍ່ກັບຜົນກະທົບ ທີ່ຈະເກີດຈາກການ ປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ ລວມທັງ ໃຫ້ມີຄວາມສາມາດ ເຂົ້າເຖິງ ແຫຼ່ງນ້ຳໄດ້ ໃນຊ່ວງໄລຍະຫ້ວຍນ້ຳ ບຶກແຫ້ງ, ທັງສາມາດ ບຳບັດນ້ຳ ແລະ ການປ້ອງກັນໄພນ້ຳຖ້ວມ; • ສ້າງຄັນຄູປ້ອງກັນໄພນ້ຳຖ້ວມ ແລະ ແນວປ້ອງກັນລົມພະຍຸ ສຳລັບພື້ນຖານໂຄງ ລ່າງຕົວເມືອງ.
ອຸປະສັກຕົ້ນຕໍໃນການຈັດຕັ້ງປະຕິບັດ	• ຍັງມີຂີດຈຳກັດດ້ານ ການຄົ້ນຄ້ວາ, ຂໍ້ມູນຂ່າວສານ ແລະ ຄວາມສາມາດ ກ່ຽວ ກັບການວາງຜັງເມືອງ ແລະ ການພັດທະນາເຕັກໂນໂລຊີ ທີ່ມີຄວາມຍືນຍົງ ແລະ ທົນທານ ຕໍ່ການປ່ຽນແປງດິນຟ້າອາກາດ; • ຍັງມີຂີດຈຳກັດດ້ານຄວາມຮູ້ ແລະ ຄວາມສາມາດ ກ່ຽວກັບການວາງຜັງເມືອງ ແລະ ການພັດທະນາເຕັກໂນໂລຊີ ທີ່ມີຄວາມຍືນຍົງ ແລະ ທົນທານ ຕໍ່ການປ່ຽນ ແປງດິນຟ້າອາກາດ; • ຍັງຂາດ ກົນໄກດ້ານການເງິນ, ການເຂົ້າຫາແຫຼ່ງທຶນ ແລະ ການລະດົມທຶນ.
ຄວາມຈຳເປັນໃນການສະໜັບສະໜູນ	• ສ້າງຄວາມເຂັ້ມແຂງ ດ້ານຄວາມສາມາດຂອງຊັບພະຍາກອນມະນຸດ ແລະ ການເງິນ ສຳລັບວຽກງານ: - ການພັດທະນາແຜນການທາງດ້ານການເງິນ ແລະ ການລົງທຶນ ສຳລັບ ການຈັດຕັ້ງປະຕິບັດ ການວາງຜັງເມືອງ ແລະ ການພັດທະນາເຕັກໂນໂລຊີ

ການຂົນສົ່ງ ແລະ ການພັດທະນາຕົວເມືອງ	
	ທີ່ມີຄວາມທົນທານ ຕໍ່ການປ່ຽນແປງດິນຟ້າອາກາດ; - ການເຊື່ອມສານ ເຕັກໂນໂລຊີ ທີ່ເໝາະສົມ ທີ່ມີຄວາມທົນທານ ຕໍ່ການປ່ຽນແປງດິນຟ້າອາກາດ ເຂົ້າໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ; • ສ້າງຄວາມເຂັ້ມແຂງ ໃນການຮວມມື ແລະ ສ້າງຄູ່ຮ່ວມງານ ແລະ ກົນໄກດ້ານການເງິນ, ການເຂົ້າຫາແຫຼ່ງທຶນ ແລະ ການລະດົມທຶນ.
ງົບປະມານສຳລັບວຽກງານ ການປັບຕົວ	ປະມານ 190 ລ້ານ ໂດລາສະຫະລັດ

ຂະແໜງການສາທາລະນະສຸກ	
ຈຸດປະສົງ 1 ແລະ ວຽກງານ ອື່ນໆທີ່ກ່ຽວຂ້ອງ	**ປັບປຸງ ໂຄງລ່າງພື້ນຖານຂອງ ສາທາລະນະສຸກ ແລະ ສິ່ງອຳນວຍຄວາມສະດວກ ໃຫ້ມີຄວາມທົນທານ ຕໍ່ການປ່ຽນແປງສະພາບດິນຟ້າອາກາດ ແລະ ໄພພິບັດ** • ພັດທະນາ ໂຄງລ່າງພື້ນຖານທີ່ກ່ຽວຂ້ອງກັບ ສາທາລະນະສຸກ ແລະ ສິ່ງອຳນວຍຄວາມສະດວກ ເປັນຕົ້ນ ສຸກສາລາ, ຫ້ອງວິເຄາະ, ລະບົບການສະໜອງນ້ຳ ແລະ ສຸກຂາພາໄມ ຢູ່ໃນເຂດຊົນນະບົດ ໃຫ້ມີຄວາມທົນທານ ຕໍ່ການປ່ຽນແປງດິນຟ້າອາກາດ; • ຍົກລະດັບຄວາມສາມາດໃນການປະເມີນຜົນກະທົບ ຂອງການປ່ຽນແປງດິນຟ້າອາກາດ, ການຄາດຄະເນ ຄວາມຈຳເປັນດ້ານການເງິນ ແລະ ຈັດຕັ້ງປະຕິບັດແຜນຕ່າງໆ ຂອງຂະແໜງສາທາລະນະສຸກ ໃຫ້ມີຄວາມທົນທານ ຕໍ່ການປ່ຽນແປງດິນຟ້າອາກາດ.
ຈຸດປະສົງ 2	**ປັບປຸງ ການບໍລິການທາງດ້ານສາທາລະນະສຸກ ສຳລັບ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ** • ປັບປຸງ ການສຶກສາ, ການຄົ້ນຄ້ວາ ກ່ຽວກັບ ຜົນກະທົບ ແລະ ພະຍາດທີ່ມາກັບ ການປ່ຽນແປງດິນຟ້າອາກາດ, ການປິ່ນປົວ (ວິທີພື້ນເມືອງ ແລະ ທັນສະໄໝ) ແລະ ການຕິດຕາມກວດກາ ແລະ ການລາຍງານ; • ປັບປຸງ ການເຂົ້າເຖິງ ຊັບພະຍາກອນມະນຸດ ແລະ ເພີ່ມທະວີ ການບໍລິການ ໃຫ້ຄອບຄຸມເຂດຊຸມຊົນ ທີ່ມີຄວາມບອບບາງ; • ປັບປຸງການສະໜອງ ອາຫານ ແລະ ຢາ, ໂພສະນາການ, ນ້ຳດື່ມ ໂດຍມີການຄຸ້ມຄອງ ລະບົບການສະໜອງໃຫ້ດີຂຶ້ນ ; • ເພີ່ມທະວີ ການສ້າງຈິດສຳນຶກໃຫ້ ສັງຄົມ ແລະ ຊຸມຊົນ ທີ່ມີຄວາມບອບບາງ ກ່ຽວກັບ ຄວາມສ່ຽງດ້ານສຸກຂະພາບ ທີ່ມາກັບການປ່ຽນແປງດິນຟ້າອາກາດ, ໃຫ້ຄຳແນະນຳ ແລະ ແຈ້ງເຕືອນ, ປັບປຸງການປະຖົມພະຍາບານຂັ້ນຕົ້ນ, ສົ່ງເສີມການເຝິ່ງພາຕົນເອງ ແລະ ການເຂົ້າເຖິງ ການບໍລິການດ້ານສຸກຂະພາບຢູ່ສຸກສາລາ ຂອງຊຸມຊົນ;

ຂະແໜງການສາທາລະນະສຸກ	
	• ພັດທະນານະໂຍບາຍ ໃນການເພີ່ມ ຄວາມສາມາດຂອງກຸ່ມຄົນບອບບາງ ແລະ ທຸກຍາກ ເພື່ອເຂົ້າເຖິງ ການບໍລິການທາງດ້ານສຸກຂະພາບ;
ອຸປະສັກຕົ້ນຕໍໃນການຈັດຕັ້ງປະຕິ ບັດ	• ຍັງມີຂີດຈຳກັດດ້ານຄວາມສາມາດ ຂອງຊັບພະຍາກອນມະນຸດ ໃນ ການດຳເນີນການປະເມີນ ຜົນກະທົບ ແລະ ຄວາມບອບບາງ ກ່ຽວກັບການປ່ຽນ ແປງດິນຟ້າອາກາດ; • ຍັງມີຂີດຈຳກັດດ້ານງົບປະມານ, ຄຸນນະພາບ ແລະ ຈຳນວນຂອງຊັບພະຍາກອນມະນຸດ; • ຍັງມີຂີດຈຳກັດດ້ານງົບປະມານ, ປະລິມານ ແລະ ຄຸນນະພາບ ຂອງ ອຸປະກອນ ຫ້ອງທົດລອງ ໃນລະດັບສູນກາງ ແລະ ທ້ອງຖິ່ນ.
ຄວາມຈຳເປັນໃນການສະໜັບສະໜູນ	• ສ້າງຄວາມສາມາດ ໃນການຕິດຕາມກວດກາ ພະຍາດລະບາດ, ແຜນຕອບໂຕ້ ແລະ ແຜນພັດທະນາຊັບພະຍາກອນມະນຸດ; • ການສະໜັບສະໜູນດ້ານ ງົບປະມານ ແລະ ວິຊາການ ໃນການດຳເນີນວຽກງານ ການສ້າງຈິດສຳນຶກ ກ່ຽວກັບ ຜົນກະທົບ ແລະ ຄວາມສ່ຽງດ້ານສຸຂະພາບ ຈາກ ການປ່ຽນແປງດິຟ້າອາກາດ; • ການສະໜັບສະໜູນດ້ານ ງົບປະມານ ແລະ ຄວາມສາມາດ ໃນການພັດທະນາສູນຕິດຕາມກວດກາ, ຫ້ອງທົດລອງ, ທີມແພດເຄື່ອນທີ່ ແລະ ຈຸດບໍລິການ ແລະ ສູນປິ່ນປົວ.
ງົບປະມານສຳລັບວຽກງານ ການປັບຕົວ	ປະມານ 5 ລ້ານ ໂດລາສະຫະລັດ (ຮອດ 2020)